# ທະນາຄານ ຫຸ້ນສ່ວນການຄ້າ ໄຊງ່ອນເທືອງຕິ່ນ - ສາຂາ ລາວ

ບົດລາຍງານຂອງຄະນະອຳນວຍການ ແລະ ເອກະສານລາຍງານການເງິນທີ່ໄດ້ກວດສອບແລ້ວ ໂດຍອີງຕາມກົດໝາຍການບັນຊີ ຂອງ ສປປ ລາວ ແລະ ກົດລະບຽບທີ່ໄດ້ວາງອອກໂດຍ ທະນາຄານ ແຫ່ງ ສປປ ລາວ ທີ່ກ່ຽວຂ້ອງກັບການກະກຽມ ແລະ ນຳສະເໜີເອກະສານລາຍງານການເງິນ

ນະວັນທີ ແລະ ສຳຫຼັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2014

# ທະນາຄານ ຫຸ້ນສ່ວນການຄ້າ ໄຊ່ງ່ອນເທືອງຕິ່ນ - ສາຂາ ລາວ

ສາລະບານ


| | ໜ້າ |
|---|---|
| ຂໍ້ມູນທົ່ວໄປຂອງທະນາຄານ | 1 |
| ບົດລາຍງານຂອງຄະນະອຳນວຍການ | 2 |
| ບົດລາຍງານຂອງນັກກວດສອບອິດສະຫຼະ | 3 - 4 |
| ໃບລາຍງານຜົນໄດ້ຮັບ | 5 -6 |
| ໃບສະຫລຸບຊັບສິນບັດ | 7 - 9 |
| ໃບລາຍງານສ່ວນປ່ຽນແປງທຶນຂອງຕົນເອງ | 10 |
| ໃບລາຍງານກະແສເງິນສົດ | 11 -12 |
| ບົດອະທິບາຍຊ້ອນທ້າຍຂອງເອກະສານລາຍງານການເງິນ | 13 – 34 |

# ທະນາຄານ ຫຸ້ນສ່ວນການຄ້າ ໄຊ່ງ່ອນເທືອງຕິ່ນ - ສາຂາ ລາວ

ຂໍ້ມູນທົ່ວໄປຂອງສາຂາ

**ສາຂາ**

ທະນາຄານ ຫຸ້ນສ່ວນການຄ້າ ໄຊ່ງ່ອນເທືອງຕິ່ນ - ສາຂາລາວ ("ສາຂາ") ແມ່ນສາຂາ ຂອງທະນາຄານ ຫຸ້ນສ່ວນການຄ້າ ໄຊ່ງ່ອນເທືອງຕິ່ນ ເຊິ່ງເປັນທະນາຄານທີ່ດໍາເນີນທຸລະກິດໃນປະເທດຫວຽດນາມ ແລະ ໄດ້ສ້າງຕັ້ງສາຂາຂຶ້ນຢູ່ໃນ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ("ສປປ ລາວ"). ສາຂາດໍາເນີນທຸລະກິດພາຍໃຕ້ໃບອະນຸຍາດດໍາເນີນທຸລະກິດເລກທີ 55 ອອກໂດຍ ທະນາຄານ ແຫ່ງ ສປປ ລາວ ລົງວັນທີ 9 ທັນວາ 2008.

ທຶນຈົດທະບຽນໃນເບື້ອງຕົ້ນຂອງສາຂາແມ່ນ 51,220,191,488 ກີບ. ທຶນຈົດທະບຽນຂອງສາຂາທີ່ໄດ້ຖອກແລ້ວ ໃນວັນທີ 31 ທັນວາ 2014 ແມ່ນ 317,130,539,793 ກີບ.

ກິດຈະກໍາຫຼັກຂອງສາຂາແມ່ນ ໃຫ້ບໍລິການທາງດ້ານການທະນາຄານ ແລະ ການບໍລິຫານທາງການເງິນອື່ນໆໃນ ສປປ ລາວ.

ສາຂາຕັ້ງຢູ່ອາຄານເລກທີ 044 ທະໜົນ ແຕ່ງບຸນ, ບ້ານ ຫາຍໂສກ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ, ສປປ ລາວ.

**ຄະນະອໍານວຍການ**

ສະມາຊິກຄະນະອໍານວຍການຂອງສາຂາ ພາຍໃນປີ ແລະ ນະວັນທີທີ່ອອກເອກະສານລາຍງານສະບັບນີ້ປະກອບມີ:

| *ຊື່* | *ຕໍາແໜ່ງ* | *ວັນທີແຕ່ງຕັ້ງ/ວັນທີລາອອກ* |
|---|---|---|
| ທ່ານ Pham Quang Phu | ຜູ້ອໍານວຍການສາຂາ | ແຕ່ງຕັ້ງ ວັນທີ 1 ສິງຫາ 2014 |
| ທ່ານ Pham Duc Duy | ຜູ້ອໍານວຍການສາຂາ | ໝົດວາລະໃນວັນທີ 31 ກໍລະກົດ 2014 |
| ທ່ານ Phan Than Tuan | ຮອງຜູ້ອໍານວຍການ | ແຕ່ງຕັ້ງ ວັນທີ 1 ກໍລະກົດ 2011 |
| ທ່ານ ນາງ ອຸໄລພອນ ໂສເງິນ | ຮອງຜູ້ອໍານວຍການ | ແຕ່ງຕັ້ງ ວັນທີ 2 ກໍລະກົດ 2012 |
| ທ່ານ Nguyen Hai Duy | ຮອງຜູ້ອໍານວຍການ | ແຕ່ງຕັ້ງ ວັນທີ 4 ສິງຫາ 2014 |

**ຕົວແທນທາງດ້ານກົດໝາຍ**

ຕົວແທນທາງດ້ານກົດໝາຍຂອງສາຂາ ພາຍໃນປີ ແລະ ນະວັນທີທີ່ອອກເອກະສານລາຍງານສະບັບນີ້ປະກອບມີ:

| *ຊື່* | *ຕໍາແໜ່ງ* | *ໄລຍະທີ່ມີສິດ* |
|---|---|---|
| ທ່ານ Pham Quang Phu | ຜູ້ອໍານວຍການສາຂາ | ຕັ້ງແຕ່ ວັນທີ 1 ສິງຫາ 2014 |
| ທ່ານ Pham Duc Duy | ຜູ້ອໍານວຍການສາຂາ | ຈາກ ວັນທີ 1 ມັງກອນ ເຖິງ ວັນທີ 31 ກໍລະກົດ 2014 |

**ນັກກວດສອບບັນຊີ**

ນັກກວດສອບບັນຊີຂອງສາຂາ ແມ່ນບໍລິສັດ ເອີນ ແອນ ຢັງ ລາວ ຈໍາກັດ.

# ທະນາຄານ ຫຸ້ນສ່ວນການຄ້າ ໄຊ່ງ່ອນເທື່ອງຕິ່ນ - ສາຂາ ລາວ

ບົດລາຍງານຂອງຄະນະອຳນວຍການ

ຄະນະອຳນວຍການຂອງ ທະນາຄານ ຫຸ້ນສ່ວນການຄ້າ ໄຊ່ງ່ອນເທື່ອງຕິ່ນ - ສາຂາລາວ (“ສາຂາ”) ມີຄວາມຍິນດີທີ່ຈະສະເໜີບົດລາຍງານ ແລະ ເອກະສານລາຍງານການເງິນຂອງສາຂາ ນະວັນທີ ແລະ ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2014.

**ຄວາມຮັບຜິດຊອບຂອງຄະນະອຳນວຍການຕໍ່ກັບເອກະສານລາຍງານການເງິນ**

ຄະນະອຳນວຍການຂອງທະນາຄານ ແມ່ນມີຄວາມຮັບຜິດຊອບໃນການກະກຽມເອກະສານລາຍງານການເງິນຂອງແຕ່ລະປີການບັນຊີ ໃຫ້ຖືກຕ້ອງຕາມຄວາມເປັນຈິງຂອງທະນາຄານ, ຜົນປະກອບການ ແລະ ກະແສເງິນສົດປະຈຳປີ ໂດຍສອດຄ່ອງກັບກົດໝາຍການບັນຊີ ແລະ ກົດລະບຽບການທີ່ວາງອອກໂດຍ ທຫລ. ໃນການກະກຽມເອກະສານລາຍງານການເງິນດັ່ງກ່າວ ຄະນະອຳນວຍການຂອງທະນາຄານຕ້ອງປະຕິບັດດັ່ງນີ້:

- ເລືອກເຟັ້ນນະໂຍບາຍດ້ານການບັນຊີທີ່ເໝາະສົມ ແລະ ນຳໃຊ້ຢ່າງສະໝ່ຳສະເໝີ;
- ພິຈາລະນາ ແລະ ຄາດຄະເນຢ່າງສົມເຫດສົມຜົນ ແລະ ຮອບຄອບ;
- ຖະແຫຼງການວ່າບັນດາມາດຕະຖານການບັນຊີທີ່ກ່ຽວຂ້ອງໄດ້ຖືກປະຕິບັດ, ທຸກຂໍ້ຂັດແຍ່ງ ຫຼື ຂໍ້ແຕກຕ່າງທີ່ສຳຄັນຕໍ່ການປະຕິບັດຕໍ່ມາດຕະຖານການບັນຊີຕ້ອງຖືກນຳມາເປີດເຜີຍ ແລະ ອະທິບາຍຢູ່ໃນເອກະສານລາຍງານການເງິນ; ແລະ
- ກະກຽມເອກະສານລາຍງານການເງິນບົນພື້ນຖານຄວາມສືບເນື່ອງໃນການດຳເນີນທຸລະກິດ, ຍົກເວັ້ນແຕ່ທາງສາຂາຫາກຕັ້ງຂໍ້ສົມມຸດຕິຖານ ຫຼື ຄາດຄະເນວ່າສາຂາບໍ່ສາມາດທີ່ຈະດຳເນີນທຸລະກິດຕໍ່ໄປໄດ້.

ຄະນະອຳນວຍການຂອງສາຂາຮັບປະກັນວ່າ ການບັນທຶກບັນຊີໄດ້ຖືກປະຕິບັດຢ່າງຖືກຕ້ອງ ເຊິ່ງໄດ້ເປີດເຜີຍຖານະການເງິນຂອງສາຂາຢ່າງເໝາະສົມໃນທຸກເວລາ ແລະ ຮັບປະກັນວ່າການບັນທຶກບັນຊີແມ່ນສອດຄ່ອງກັບລະບົບການບັນຊີທີ່ໄດ້ນຳໃຊ້. ນອກນັ້ນ, ຄະນະອຳນວຍການຍັງຕ້ອງຮັບຜິດຊອບຕໍ່ການຮັກສາຊັບສົມບັດຄົງທີ່ຂອງສາຂາ ແລະ ຮັບປະກັນວ່າສາຂາມີຂັ້ນຕອນການກວດສອບທີ່ເໝາະສົມເພື່ອປ້ອງກັນການສໍ້ໂກງ ຫລື ສິ່ງທີ່ຜິດປົກກະຕິອື່ນໆ.

ຄະນະອຳນວຍການໄດ້ຢັ້ງຢືນວ່າ ສາຂາໄດ້ປະຕິບັດຕາມເງື່ອນໄຂຂ້າງເທິງໃນການກະກຽມເອກະສານລາຍງານການເງິນ ສຳລັບປີທີ່ສິ້ນສຸດ 31 ທັນວາ 2014.

**ຄຳຖະແຫຼງການຂອງຄະນາອຳນວຍການ**

ຄະນະອຳນວຍການຂໍຮັບຮອງວ່າ ເອກະສານລາຍງານການເງິນໄດ້ສະແດງເຖິງຄວາມຖືກຕ້ອງຕາມຄວາມເປັນຈິງຂອງຖານະການເງິນຂອງສາຂາ ນະວັນທີ 31 ທັນວາ 2014 ລວມທັງ ຜົນປະກອບການ ແລະ ກະແສເງິນສົດສຳລັບປີທີ່ສິ້ນສຸດ ໃນວັນທີດັ່ງກ່າວ ໂດຍສອດຄ່ອງກັບກົດໝາຍການບັນຊີ ແລະ ລະບຽບການທີ່ວາງອອກໂດຍ ທະນາຄານ ແຫ່ງ ສປປ ລາວ ທີ່ກ່ຽວຂ້ອງກັບການກະກຽມ ແລະ ການນຳສະເໜີເອກະສານລາຍງານການເງິນ.

ໃນນາມ ແລະ ຕາງໜ້າຄະນະອຳນວຍການ:

ທ່ານ Pham Quang Phu
ຜູ່ອຳນວຍການສາຂາ

ນະຄອນຫລວງວຽງຈັນ, ສປປ ລາວ
19 ມີນາ 2015

EY
Building a better working world

Ernst & Young Lao Limited
6th Floor, Capital Tower
23 Singha Road, Nongbone Village
Saysettha District, Vientiane Capital, Lao PDR

Tel : + 856 21 455 077
Fax: + 856 21 455 078
ey.com

ເລກທີອ້າງອີງ: 61079125/17292063

# ບົດລາຍງານຂອງນັກກວດສອບອິດສະຫຼະ

ຮຽນ: ທະນາຄານ ຫຸ້ນສ່ວນການຄ້າ ໄຊ່ງ່ອນເທືອງຕື່ນ - ສາຂາ ລາວ

ພວກຂ້າພະເຈົ້າໄດ້ດຳເນີນການກວດສອບເອກະສານລາຍງານການເງິນຂອງທະນາຄານ ຫຸ້ນສ່ວນການຄ້າ ໄຊ່ງ່ອນເທືອງຕື່ນ - ສາຂາ ລາວ ("ຕໍ່ໄປນີ້ເອີ້ນວ່າ ສາຂາ"), ເຊິ່ງລວມມີໃບສະຫຼຸບຊັບສິນບັດ ນະວັນທີ 31 ທັນວາ 2014, ໃບລາຍງານຜົນໄດ້ຮັບ, ໃບລາຍງານກະແສເງິນສົດ ແລະ ໃບລາຍງານສ່ວນປ່ຽນແປງທຶນຂອງຕົນເອງ ສຳລັບປີທີ່ສິ້ນສຸດໃນວັນທີດັ່ງກ່າວ ແລະ ບົດອະທິບາຍຊ້ອນທ້າຍຂອງເອກະສານລາຍງານການເງິນ ເຊິ່ງໄດ້ອະທິບາຍລາຍລະອຽດ ແຕ່ໜ້າທີ 5 ຫາ 34.

### *ຄວາມຮັບຜິດຊອບຂອງຄະນະອຳນວຍການຕໍ່ເອກະສານລາຍງານການເງິນ*

ຄະນະອຳນວຍການສາຂາ ມີໜ້າທີ່ຮັບຜິດຊອບໃນການກະກຽມ ແລະ ນຳສະເໜີເອກະສານລາຍງານການເງິນຢ່າງຖືກຕ້ອງໂດຍສອດຄ່ອງກັບ ກົດໝາຍການບັນຊີ ແລະ ລະບຽບການບັນຊີທີ່ວາງອອກໂດຍ ທະນາຄານ ແຫ່ງ ສປປ ລາວ ທີ່ກ່ຽວຂ້ອງກັບການກະກຽມ ແລະ ການນຳສະເໜີເອກະສານລາຍງານການເງິນ ແລະ ການຄວບຄຸມພາຍໃນທີ່ຜູ່ບໍລິຫານເຫັນວ່າມີຄວາມຈຳເປັນໃນການກະກຽມເອກະສານລາຍງານການເງິນທີ່ປາສະຈາກການລາຍງານທີ່ຜິດພາດ ອັນເນື່ອງມາຈາກການສໍ້ໂກງ ຫຼື ຂໍ້ຜິດພາດ.

### *ຄວາມຮັບຜິດຊອບຂອງນັກກວດສອບອິດສະຫຼະ*

ຄວາມຮັບຜິດຊອບຂອງພວກຂ້າພະເຈົ້າແມ່ນການອອກຄຳເຫັນກ່ຽວກັບເອກະສານລາຍງານການເງິນເຫຼົ່ານີ້ ໂດຍອີງໃສ່ຜົນການກວດສອບຂອງພວກຂ້າພະເຈົ້າ. ພວກຂ້າພະເຈົ້າໄດ້ດຳເນີນການກວດສອບໂດຍສອດຄ່ອງກັບມາດຕະຖານສາກົນດ້ານການກວດສອບ. ມາດຕະຖານເຫຼົ່ານີ້ໄດ້ກຳນົດໃຫ້ພວກຂ້າພະເຈົ້າປະຕິບັດຕາມຂໍ້ບັງຄັບດ້ານຈັນຍາບັນ, ວາງແຜນ ແລະ ດຳເນີນການກວດສອບ ເພື່ອໃຫ້ໄດ້ການຮັບປະກັນຢ່າງສົມເຫດສົມຜົນວ່າ ເອກະສານລາຍງານການເງິນປາສະຈາກການລາຍງານຜິດພາດອັນໃຫຍ່ຫຼວງ.

ການກວດສອບໄດ້ກ່ຽວພັນເຖິງຂັ້ນຕອນການດຳເນີນງານຕ່າງໆໃນການເກັບກຳຫຼັກຖານດ້ານການກວດສອບເພື່ອຢັ້ງຢືນຄວາມຖືກຕ້ອງຈຳນວນເງິນ ແລະ ການເປີດເຜີຍຂໍ້ມູນຕ່າງໆໃນເອກະສານລາຍງານການເງິນ. ຂັ້ນຕອນທີ່ຖືກຄັດເລືອກຈະຂຶ້ນກັບການວິນິໄສຂອງຜູ້ກວດສອບລວມ ເຖິງການປະເມີນຄວາມສ່ຽງຂອງການລາຍງານທີ່ຜິດພາດໃນເອກະສານລາຍງານການເງິນ ອັນເນື່ອງມາຈາກການສໍ້ໂກງ ຫລື ຂໍ້ຜິດພາດ. ໃນການດຳເນີນການປະເມີນຄວາມສ່ຽງດັ່ງກ່າວ, ນັກກວດກວດສອບຈະພິຈາລະນາການຄວບຄຸມພາຍໃນຂອງທະນາຄານທີ່ກ່ຽວຂ້ອງກັບການກະກຽມ ແລະ ການນຳສະເໜີເອກະສານລາຍງານການເງິນທີ່ຖືກຕ້ອງ ເພື່ອທີ່ຈະອອກແບບວິທີການກວດສອບທີ່ແທດເໝາະຕາມສະພາບການ. ແຕ່ບໍ່ແມ່ນເພື່ອຈຸດປະສົງໃນການສະແດງຄຳເຫັນກ່ຽວກັບປະສິດທິພາບຂອງ ການຄວບຄຸມພາຍໃນຂອງທະນາຄານ. ການກວດສອບຍັງລວມມີການປະເມີນຄວາມເໝາະສົມຂອງນະໂຍບາຍການບັນຊີທີ່ນຳໃຊ້ ແລະ ຄວາມສົມເຫດສົມຜົນຂອງການຄາດຄະເນຂອງການບັນຊີທີ່ຄະນະບໍລິຫານວາງອອກ, ພ້ອມກັນນັ້ນ, ກໍ່ຍັງປະເມີນພາບລວມຂອງການນຳສະເໜີເອກະສານລາຍງານການເງິນ.

ພວກຂ້າພະເຈົ້າເຊື່ອວ່າ ບັນດາຫຼັກຖານດ້ານການກວດສອບທີ່ພວກຂ້າພະເຈົ້າໄດ້ຮັບນັ້ນແມ່ນແທດເໝາະ ແລະ ພຽງພໍສຳລັບ ເປັນພື້ນຖານໃນການອອກຄຳເຫັນດ້ານການກວດສອບຂອງພວກຂ້າພະເຈົ້າ.

EY
Building a better working world

*ຄຳເຫັນ*

ໃນຄວາມເຫັນຂອງພວກຂ້າພະເຈົ້າເຫັນວ່າ, ເອກະສານລາຍງານການເງິນແມ່ນໄດ້ສະແດງພາບພົດອັນຖືກຕ້ອງ ແລະ ຍຸດຕິທຳກ່ຽວກັບຖານະການເງິນຂອງ ທະນາຄານ ຫຸ້ນສ່ວນການຄ້າ ໄຊ່ງ່ອນເທືອງຕິ່ນ - ສາຂາ ລາວ ນະວັນທີ 31 ທັນວາ 2014 ລວມທັງ ຜົນປະກອບການ ແລະ ກະແສເງິນສົດສຳລັບປີທີ່ສິ້ນສຸດໃນວັນທີດັ່ງກ່າວ ໂດຍສອດຄ່ອງຕາມກົດໝາຍການບັນຊີຂອງ ສປປ ລາວ ແລະ ລະບຽບການທີ່ອອກໂດຍ ທະນາຄານແຫ່ງ ສປປ ລາວ ທີ່ກ່ຽວຂ້ອງກັບການກະກຽມ ແລະ ການນຳສະເໜີເອກະສານລາຍງານການເງິນ.

Ernst & Young Lao Ltd

ນະຄອນຫລວງວຽງຈັນ, ສປປ ລາວ

19 ມີນາ 2015

# ທະນາຄານ ຫຸ້ນສ່ວນການຄ້າ ໄຊ່ງ່ອນເທືອງຕິ່ນ - ສາຂາ ລາວ

ໃບລາຍງານຜົນໄດ້ຮັບ
ສໍາລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2014

*ຫົວໜ່ວຍ: ລ້ານກີບ*

| *ລໍາດັບ* | *ລາຍການ* | *ບົດອະທິບາຍ ເລກທີ* | *2014* | *2013* |
|---|---|---|---|---|
| A. | **ລາຍຮັບ ແລະ ລາຍຈ່າຍຈາກການດໍາເນີນງານ** | | | |
| 1 | **ລາຍຮັບດອກເບ້ຍ ແລະ ລາຍຮັບທີ່ຄ້າຍຄືກັນ** | 3 | **60,101** | **58,508** |
| 1.1 | ລາຍຮັບຈາກດອກເບ້ຍ ແລະ ຄ້າຍຄືດອກເບ້ຍລະຫວ່າງທະນາຄານ | | 494 | 1,462 |
| 1.2 | ລາຍຮັບຈາກດອກເບ້ຍ ແລະ ຄ້າຍຄືດອກເບ້ຍຈາກລູກຄ້າ | | 59,607 | 56,609 |
| 1.3 | ລາຍຮັບຈາກດອກເບ້ຍ ແລະ ຄ້າຍຄືດອກເບ້ຍອື່ນໆ | | - | 437 |
| 2 | **ລາຍຈ່າຍດອກເບ້ຍ ແລະ ລາຍຈ່າຍທີ່ຄ້າຍຄືກັນ** | 3 | **(24,383)** | **(19,426)** |
| 2.1 | ລາຍຮັບຈາກດອກເບ້ຍ ແລະ ຄ້າຍຄືດອກເບ້ຍລະຫວ່າງທະນາຄານ | | (2,395) | (4,435) |
| 2.2 | ລາຍຮັບຈາກດອກເບ້ຍ ແລະ ຄ້າຍຄືດອກເບ້ຍໃຫ້ລູກຄ້າ | | (21,988) | (14,991) |
| I. | **ລາຍຮັບສຸດທິຈາກດອກເບ້ຍ ແລະ ຄ້າຍຄືດອກເບ້ຍ** | | **35,718** | **39,082** |
| 3 | **ລາຍໄດ້ຄ່າທໍານຽມ ແລະ ຄ່ານາຍໜ້າ** | 4 | **3,801** | **4,269** |
| 4 | **ຄ່າທໍານຽມ ແລະ ຄ່າໃຊ້ຈ່າຍນາຍໜ້າ** | | **(107)** | **(80)** |
| 5 | **ກໍາໄລສຸດທິຈາກການແລກປ່ຽນເງິນຕາຕ່າງປະເທດ** | 5 | **1,697** | **587** |
| II. | **ລາຍຮັບສຸດທິຈາກການດໍາເນີນງານ** | | **41,109** | **43,858** |
| B | **ລາຍຮັບ ແລະ ລາຍຈ່າຍອື່ນໆ** | | | |
| 9 | **ລາຍຮັບອື່ນໆຈາກການດໍາເນີນງານ** | 6 | **738** | **572** |
| 10 | **ຄ່າໃຊ້ຈ່າຍໃນການບໍລິຫານງານ** | | **(16,788)** | **(14,327)** |
| 10.1 | ເງິນເດືອນ ແລະ ຄ່າໃຊ້ຈ່າຍບຸກຄະລາກອນອື່ນໆ | 7 | (7,492) | (6,735) |
| 10.2 | ຄ່າໃຊ້ຈ່າຍໃນການບໍລິຫານອື່ນໆ | 8 | (8,856) | (7,224) |
| 10.3 | ຄ່າໃຊ້ຈ່າຍອື່ນໆ | | (440) | (368) |
| 11 | **ຄ່າຫລຸ້ຍຫ້ຽນ ແລະ ຄ່າເຊື່ອມ** | | **(7,525)** | **(8,001)** |
| 12 | **ຄ່າໃຊ້ຈ່າຍອື່ນໆໃນການດໍາເນີນງານ** | 9 | **(394)** | **(1,134)** |
| 13 | **ເງິນແຮໜີ້ຕ້ອງຮັບທວງຍາກ/ຫັກເປັນລາຍຈ່າຍໃນປີ** | 12.2 | **(850)** | - |
| III. | **ກໍາໄລກ່ອນອາກອນ** | | **16,290** | **20,968** |
| 14 | **ອາກອນກໍາໄລພາຍໃນປີ** | 20 | **(3,910)** | **(5,032)** |
| IV. | **ກໍາໄລຫລັງອາກອນ** | | **12,380** | **15,936** |

## ທະນາຄານ ຫຸ້ນສ່ວນການຄ້າ ໄຊ່ງ່ອນເທືອງຕິ່ນ - ສາຂາ ລາວ

ໃບລາຍງານຜົນໄດ້ຮັບ (ຕໍ່)
**ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2014**

ກະກຽມໂດຍ:

ທ່ານ ທຸມພັນ ທຳມະວົງ
ຜູ້ຈັດການ ການເງິນ ແລະ ບັນຊີ

ອະນຸມັດໂດຍ:

ທ່ານ Pham Quang Phu
ຜູ້ອຳນວຍການສາຂາ

ນະຄອນຫຼວງວຽງຈັນ, ສປປ ລາວ

19 ມີນາ 2015

# ທະນາຄານ ຫຸ້ນສ່ວນການຄ້າ ໄຊ່ງ່ອນເທືອງຕື່ນ - ສາຂາ ລາວ

ໃບສະຫຼຸບຊັບສິນບັດ

ນະວັນທີ 31 ທັນວາ 2014

*ຫົວໜ່ວຍ: ລ້ານກີບ*

| *ລຳດັບ* | *ຊັບສິນ* | *ບົດອະທິບາຍ ເລກທີ* | *31 ທັນວາ 2014* | *31 ທັນວາ 2013* |
|---|---|---|---|---|
| I | **ເງິນສົດ ແລະ ເງິນຝາກຢູ່ ທຫລ** | 10 | **131,688** | **86,290** |
| | 1. ເງິນສົດໃນກຳມື | | 14,776 | 28,060 |
| | 2. ເງິນຝາກຢູ່ ທຫລ | | 116,912 | 58,230 |
| II | **ໜີ້ຕ້ອງຮັບຈາກທະນາຄານອື່ນ** | | **44,145** | **21,307** |
| | 1. ເງິນຝາກກະແສລາຍວັນ | 11.1 | 21,094 | 8,294 |
| | 2. ເງິນຝາກມີກຳນົດ | 11.2 | 23,051 | 13,013 |
| III | **ເງິນກູ້ ແລະ ເງິນລ່ວງໜ້າສຳລັບລູກຄ້າ (ຫຼັງຫັກເງິນແຮໜີ້ຕ້ອງຮັບທວງຍາກ)** | **12** | **557,272** | **585,317** |
| V | **ຊັບສິນບັດຄົງທີ່** | | **119,129** | **125,943** |
| | 1. ຊັບສິນຄົງທີ່ບໍ່ມີຕົວຕົນ | 13 | 14,587 | 15,010 |
| | 2. ຊັບສິນຄົງທີ່ມີຕົວຕົນ | 14 | 104,542 | 110,933 |
| VII | **ຊັບສິນອື່ນໆ** | | **12,453** | **13,291** |
| | 1. ໜີ້ຕ້ອງຮັບດອກເບ້ຍຄ້າງຮັບ | 15 | 2,329 | 2,504 |
| | 2. ຊັບສິນອື່ນໆ | 16 | 10,124 | 10,787 |
| | **ລວມຊັບສິນ** | | **864,687** | **832,148** |

# ທະນາຄານ ຫຸ້ນສ່ວນການຄ້າ ໄຊ່ງ່ອນເທືອງຕິ່ນ - ສາຂາ ລາວ

ໃບລະຫຼຸບຊັບສິນບັດ (ຕໍ່)
ນະວັນທີ 31 ທັນວາ 2014

*ຫົວໜ່ວຍ: ລ້ານກີບ*

| *ລຳດັບ* | *ລາຍການ* | *ບົດອະທິບາຍ ເລກທີ* | *31 ທັນວາ 2014* | *31 ທັນວາ 2013* |
|---|---|---|---|---|
| I | **ໜີ້ຕ້ອງສົ່ງໃຫ້ທະນາຄານອື່ນ** | 17 | **143,165** | **165,189** |
| | 1. ເງິນຝາກກະແສລາຍວັນ ແລະ ເງິນຝາກປະຢັດ | | 87,184 | 85,838 |
| | 2. ເງິນຝາກມີກຳນົດ | | 55,981 | 79,351 |
| II | **ໜີ້ຕ້ອງສົ່ງໃຫ້ລູກຄ້າ** | 18 | **356,235** | **301,307** |
| | 1. ເງິນຝາກກະແສລາຍວັນ, ເງິນຝາກປະຢັດ ແລະ ເງິນຝາກມັດຈຳ | | 105,840 | 98,943 |
| | 2. ເງິນຝາກມີກຳນົດ | | 247,491 | 202,194 |
| | 3. ໜີ້ຕ້ອງສົ່ງອື່ນໆໃຫ້ລູກຄ້າ | | 2,904 | 170 |
| III | **ໜີ້ສິນອື່ນໆ** | | **29,380** | **27,353** |
| | 1. ດອກເບ້ຍຄ້າງຈ່າຍ | 19 | 13,136 | 7,841 |
| | 2. ອາກອນຄ້າງຈ່າຍໃຫ້ລັດຖະບານ | 20 | 970 | 1,223 |
| | 3. ໜີ້ສິນອື່ນໆ | 21 | 15,274 | 18,289 |
| | **ລວມໜີ້ສິນ** | | **528,780** | **493,849** |
| IV | **ທຶນ ແລະ ເງິນສຳຮອງ** | | **335,907** | **338,299** |
| | 1. ທຶນຈົດທະບຽນ | | 317,131 | 317,131 |
| | 2. ຄັງສຳຮອງຕາມລະບຽບການ | | 4,836 | 3,595 |
| | 3. ເງິນແຮທົ່ວໄປສຳລັບການສູນເສຍເງິນກູ້ລວມ | 12.2 | 2,798 | 3,231 |
| | 4. ກຳໄລສະສົມ | | 11,142 | 14,342 |
| | **ລວມທຶນ** | | **335,907** | **338,299** |
| | **ລວມຍອດໜີ້ສິນ ແລະ ທຶນ** | | 864,687 | 832,148 |

ກະກຽມໂດຍ:

ທ່ານ ທູມພັນ ທຳມະວົງ
ຜູ້ຈັດການ ການເງິນ ແລະ ບັນຊີ

ອະນຸມັດໂດຍ:

ທ່ານ Pham Quang Phu
ຜູ້ອຳນວຍການສາຂາ

ທະນາຄານ ຫຸ້ນສ່ວນການຄ້າໄຊ່ງ່ອນ ເທືອງຕິ່ນ-ສາຂາລາວ SAIGON THUONGTIN COMMERCIAL JOINT STOCK BANK-LAO BRANCH

ນະຄອນຫຼວງວຽງຈັນ, ສປປ ລາວ
19 ມີນາ 2015

# ທະນາຄານ ຫຸ້ນສ່ວນການຄ້າ ໄຊ່ງ່ອນເທືອງຕິ່ນ - ສາຂາ ລາວ

ໃບສະຫຼຸບຊັບສິນບັດ (ຕໍ່)
ນະວັນທີ 31 ທັນວາ 2014

*ຫົວໜ່ວຍ: ລ້ານກີບ*

| *ລຳດັບ* | *ລາຍການນອກໃບສະຫຼຸບຊັບສິນບັດ* | *ບົດອະທິບາຍ ເລກທີ* | *31 ທັນວາ 2014* | *31 ທັນວາ 2013* |
|---|---|---|---|---|
| I | **ຄຳໝັ້ນສັນຍາ** | | | |
| 1 | ຄຳໝັ້ນສັນຍາການຄ້ຳປະກັນທີ່ໄດ້ໃຫ້ກັບລູກຄ້າ | | - | 1,244 |
| | **ລວມຍອດຄຳໝັ້ນສັນຍາທີ່ໄດ້ໃຫ້** | | - | 1,244 |
| II | **ຫລັກຊັບຄ້ຳປະກັນ ແລະ ຈຳນອງ** | | | |
| A | **ຫລັກຊັບຄ້ຳປະກັນ ແລະ ຈຳນອງ ສຳລັບເງິນກູ້** | | **1,855,670** | **1,208,873** |
| 1 | ຫລັກຊັບຄ້ຳປະກັນ ແລະ ຊວດຈຳສຳລັບເງິນກູ້ໃຫ້ລູກຄ້າ | | 1,855,670 | 1,208,873 |
| B | **ຫລັກຊັບຄ້ຳປະກັນ ແລະ ຈຳນອງສຳລັບການຄ້ຳປະກັນທີ່ໄດ້ໃຫ້** | | **-** | **21,173** |
| 1 | ຫລັກຊັບຄ້ຳປະກັນ ແລະ ຈຳນອງສຳລັບການຄ້ຳປະກັນໃຫ້ລູກຄ້າ | | - | 21,173 |
| | ລວມຫລັກຊັບຄ້ຳປະກັນ ແລະ ຈຳນອງ | | 1,855,670 | 1,230,046 |

ກະກຽມໂດຍ:

ທ່ານ ທູມພັນ ທຳມະວົງ
ຜູ້ຈັດການ ການເງິນ ແລະ ບັນຊີ

ອະນຸມັດໂດຍ:

ທ່ານ Pham Quang Phu
ຜູ້ອຳນວຍການສາຂາ

ນະຄອນຫຼວງວຽງຈັນ, ສປປ ລາວ

19 ມີນາ 2015

# ທະນາຄານ ຫຸ້ນສ່ວນການຄ້າ ໄຊ່ງ່ອນເທືອງຕິ່ນ - ສາຂາ ລາວ

ໃບລາຍງານສ່ວນປ່ຽນແປງທຶນຂອງຕົນເອງ
ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2014

*ຫົວໜ່ວຍ: ລ້ານກີບ*

| | *ທຶນຈົດທະບຽນທີ່ຖອກແລ້ວ* | *ຄັງສຳຮອງຕາມລະບຽບການ* | *ເງິນແຮທົ່ວໄປສຳລັບການສູນເສຍເງິນກູ້ລວມ* | *ກຳໄລສະສົມ* | *ລວມ* |
|---|---|---|---|---|---|
| **ຍອດເຫຼືອນະວັນທີ 31 ທັນວາ 2012** | 317,131 | **2,001** | **2,359** | **10,676** | **332,167** |
| ກຳໄລສຸດທິໃນປີ | - | - | - | 15,936 | 15,936 |
| ແບ່ງປັນເຂົ້າຄັງສຳຮອງໃນປີ | - | 1,594 | - | (1,594) | - |
| ຫັກເງິນແຮທົ່ວໄປພາຍໃນປີ | - | - | 878 | - | 878 |
| ສ່ວນຜິດດ່ຽງຈາກອັດຕາແລກປ່ຽນ | - | - | (6) | - | (6) |
| ໂອນກຳໄລສະສົມເຂົ້າສຳນັກງານໃຫຍ່ | - | - | - | (10,676) | (10,676) |
| **ຍອດເຫຼືອນະວັນທີ 31 ທັນວາ 2013** | 317,131 | **3,595** | **3,231** | **14,342** | **338,299** |
| ກຳໄລສຸດທິໃນປີ | - | - | - | 12,380 | 12,380 |
| ແບ່ງປັນເຂົ້າຄັງສຳຮອງ | - | 1,238 | - | (1,238) | - |
| ຫັກເງິນແຮທົ່ວໄປພາຍໃນປີ | - | - | (442) | - | (442) |
| ສ່ວນຜິດດ່ຽງຈາກອັດຕາແລກປ່ຽນ | - | 3 | 9 | - | 12 |
| ໂອນກຳໄລສະສົມເຂົ້າສຳນັກງານໃຫຍ່ | - | - | - | (14,342) | (14,342) |
| ຍອດເຫຼືອ 31 ທັນວາ 2014 | 317,131 | 4,836 | 2,798 | **11,142** | 335,907 |

ກະກຽມໂດຍ:

ທ່ານ ທຸມພັນ ທຳມະວົງ
ຜູ້ຈັດການ ການເງິນ ແລະ ບັນຊີ

ອະນຸມັດໂດຍ:

ທ່ານ Pham Quang Phu
ຜູ້ອຳນວຍການສາຂາ

ນະຄອນຫຼວງວຽງຈັນ, ສປປ ລາວ
19 ມີນາ 2015

# ທະນາຄານ ຫຸ້ນສ່ວນການຄ້າ ໄຊ່ງ່ອນເທືອງຕິ່ນ - ສາຂາ ລາວ

ໃບລາຍງານກະແສເງິນສົດ
ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2014

*ຫົວໜ່ວຍ: ລ້ານກີບ*

| | *ບົດອະທິບາຍຊ້ອນທ້າຍ* | 2014 | 2013 |
|---|---|---|---|
| **ກຳໄລສຸດທິຫລັງອາກອນ:** | | **12,380** | **15,936** |
| *ດັດແກ້ສຳລັບ:* | | | |
| ລາຍຈ່າຍຄ່າຫລຸ້ຍຫ້ຽນ ແລະ ຄ່າເສື່ອມ | | 7,525 | 8,001 |
| ເງິນແຮສຳລັບເງິນກູ້ໃຫ້ລູກຄ້າ | 12.2 | (215) | 878 |
| ລາຍຈ່າຍອາກອນກຳໄລ | 20 | 3,910 | 5,032 |
| **ກະແສເງິນສົດຈາກກຳໄລຈາກການດຳເນີນງານກ່ອນການປ່ຽນແປງຊັບສິນ ແລະ ໜີ້ສິນໃນການດຳເນີນງານ** | | **23,600** | **29,847** |
| | | | |
| (ເພີ່ມຂຶ້ນ)/ຫລຸດລົງສຳລັບຊັບສິນຈາກການດຳເນີນງານ | | | |
| ເງິນກູ້ໃຫ້ແກ່ລູກຄ້າ | | 27,813 | (115,016) |
| ຊັບສິນອື່ນໆ | | 838 | (2,770) |
| ໜີ້ຕ້ອງຮັບຈາກທະນາຄານອື່ນ | | (9,530) | 247,027 |
| | | | |
| ເພີ່ມຂຶ້ນ/(ຫລຸດລົງ)ຂອງໜີ້ສິນຈາກການດຳເນີນງານ | | | |
| ໜີ້ຕ້ອງສົ່ງລູກຄ້າ | | 52,194 | 62,358 |
| ໜີ້ຕ້ອງສົ່ງທະນາຄານອື່ນ | | (22,024) | (173,305) |
| ອາກອນທຸລະກິດຈ່າຍພາຍໃນປີ | 20 | (4,167) | (8,338) |
| ໜີ້ສິນອື່ນໆ | | 5,018 | 13,265 |
| **ກະແສເງິນສົດສຸດທິຈາກກິດຈະກຳການດຳເນີນງານ** | | **73,742** | **53,068** |
| | | | |
| **ກະແສເງິນສົດຈາກກິດຈະກຳດ້ານການລົງທຶນ** | | | |
| ການຊື້ ແລະ ການກໍ່ສ້າງຊັບສິນບັດຄົງທີ່ | 13,14 | (711) | (343) |
| ຈ່າຍລຳລ່າຊື້ຫຼັກຊັບໜີ້ | | - | (50,000) |
| ຮັບຈາກການຂາຍຫຼັກຊັບໜີ້ | | - | 50,000 |
| **ກະແສເງິນສົດສຸດທິທີ່ໃຊ້ເຂົ້າໃນກິດຈະກຳການລົງທຶນ** | | **(711)** | **(343)** |
| | | | |
| **ກະແສເງິນສົດຈາກກິດຈະກຳທາງດ້ານການເງິນ** | | | |
| ໂອນກຳໄລສະສົມເຂົ້າສຳນັກງານໃຫຍ່ | | (14,342) | (10,676) |
| **ກະແສເງິນສົດສຸດທິທີ່ໃຊ້ເຂົ້າໃນກິດຈະກຳທາງດ້ານການເງິນ** | | **(14,342)** | **(10,676)** |
| **ເພີ່ມຂຶ້ນສຸດທິຂອງເງິນສົດ ແລະ ທຽບເທົ່າເງິນສົດ** | | **71,630** | **42,049** |
| **ເງິນສົດ ແລະ ທຽບເທົ່າເງິນສົດຕົ້ນປີ** | | **79,527** | **37,484** |
| **ສ່ວນຜິດດ່ຽງສຸດທິຈາກການແລກປ່ຽນເງິນຕາຕ່າງປະເທດ** | | **16** | **(6)** |
| **ເງິນສົດ ແລະ ທຽບເທົ່າເງິນສົດໃນທ້າຍປີ** | 22 | **138,233** | **79,527** |

## ທະນາຄານ ຫຸ້ນສ່ວນການຄ້າ ໄຊ່ງ່ອນເທືອງຕິ່ນ - ສາຂາ ລາວ

ໃບລາຍງານກະແສເງິນສົດ (ຕໍ່)
**ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2014**

ກະກຽມໂດຍ:

ທ່ານ ທຸມພັນ ທຳມະວົງ
ຜູ້ຈັດການ ການເງິນ ແລະ ບັນຊີ

ອະນຸມັດໂດຍ:

ທ່ານ Pham Quang Phu
ຜູ້ອຳນວຍການສາຂາ

ທະນາຄານ ຫຸ້ນສ່ວນການຄ້າໄຊ່ງ່ອນ ເທືອງຕິ່ນ-ສາຂາລາວ SAIGON THUONG TIN COMMERCIAL JOINT STOCK BANK-LAO BRANCH

**ນະຄອນຫຼວງວຽງຈັນ, ສປປ ລາວ**

**19 ມີນາ 2015**

# ທະນາຄານ ຫຸ້ນສ່ວນການຄ້າ ໄຊ່ງ່ອນເທືອງຕື່ນ - ສາຂາ ລາວ

ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ
ນະວັນທີ ແລະ ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2014

## 1. ຂໍ້ມູນກ່ຽວກັບສາຂາ

ທະນາຄານ ຫຸ້ນສ່ວນການຄ້າ ໄຊ່ງ່ອນເທືອງຕື່ນ - ສາຂາ ລາວ ("ສາຂາ") ແມ່ນສາຂາ ຂອງທະນາຄານ ຫຸ້ນສ່ວນການຄ້າ ໄຊ່ງ່ອນເທືອງຕື່ນ ເຊິ່ງເປັນທະນາຄານທີ່ດຳເນີນທຸລະກິດໃນປະເທດຫວຽດນາມ ແລະ ໄດ້ສ້າງຕັ້ງສາຂາຂຶ້ນຢູ່ໃນ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ("ສປປ ລາວ"). ສາຂາດຳເນີນທຸລະກິດພາຍໃຕ້ໃບອະນຸຍາດດຳເນີນທຸລະກິດ ເລກທີ 55 ອອກໂດຍ ທະນາຄານ ແຫ່ງ ສປປ ລາວ ລົງວັນທີ 9 ທັນວາ 2008.

### *ທຶນຈົດທະບຽນ*

ສາຂາມີທຶນປະກອບໃນເບື້ອງຕົ້ນແມ່ນ 51,220,191,448 ກີບ. ນະວັນທີ 31 ທັນວາ 2013 ທຶນຈົດທະບຽນທີ່ຖອກແລ້ວຂອງສາຂາ ແມ່ນ 317,130,539,793 ກີບ . (ນະວັນທີ 31 ທັນວາ 2013 ແມ່ນ 317,130,539,793 ກີບ)

### *ທີ່ຕັ້ງ*

ສາຂາຕັ້ງຢູ່ອາຄານ ເລກທີ 044 ຖະໜົນ ແຫ່ງບຸນ, ບ້ານ ຫາຍໂສກ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ, ສປປ ລາວ.

### *ຄະນະອຳນວຍການ*

ສະມາຊິກຄະນະອຳນວຍການຂອງສາຂາ ພາຍໃນປີ ແລະ ນະວັນທີທີ່ອອກເອກະສານລາຍງານສະບັບນີ້ປະກອບມີ:

| *ຊື່* | *ຕຳແໜ່ງ* | *ວັນທີແຕ່ງຕັ້ງ/ວັນທີລາອອກ* |
|---|---|---|
| ທ່ານ Pham Quang Phu | ຜູ້ອຳນວຍການສາຂາ | ແຕ່ງຕັ້ງ ວັນທີ 1 ສິງຫາ 2014 |
| ທ່ານ Pham Duc Duy | ຜູ້ອຳນວຍການສາຂາ | ໝົດວາລະໃນວັນທີ 31 ກໍລະກົດ 2014 |
| ທ່ານ Phan Than Tuan | ຮອງຜູ້ອຳນວຍການ | ແຕ່ງຕັ້ງ 1 ກໍລະກົດ 2011 |
| ທ່ານ ນາງ ອຸໄລພອນ ໂສເງິນ | ຮອງຜູ້ອຳນວຍການ | ແຕ່ງຕັ້ງ 2 ກໍລະກົດ 2012 |
| ທ່ານ Nguyen Hai Duy | ຮອງຜູ້ອຳນວຍການ | ແຕ່ງຕັ້ງ 4 ສິງຫາ 2014 |

### *ພະນັກງານ*

ຈຳນວນພະນັກງານທັງໝົດຂອງສາຂານະວັນທີ 31 ທັນວາ 2014 ແມ່ນ 78 ຄົນ (ນະວັນທີ 31 ທັນວາ 2013 ແມ່ນ 72 ຄົນ).

# ທະນາຄານ ຫຸ້ນສ່ວນການຄ້າ ໄຊ່ງ່ອນເທືອງຕື່ນ - ສາຂາ ລາວ

ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ (ຕໍ່)
ນະວັນທີ ແລະ ສໍາລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2014

## 2. ສະຫລຸບນະໂຍບາຍການບັນຊີທີ່ສໍາຄັນ

ນະໂຍບາຍຫລັກການການບັນຊີທີ່ສໍາຄັນ ທີ່ນໍາໃຊ້ເຂົ້າໃນການກະກຽມເຮັດເອກະສານລາຍງານການເງິນ ມີດັ່ງລຸ່ມນີ້:

### *2.1 ຖະແຫຼງການການປະຕິບັດຕາມກົດໝາຍການບັນຊີຂອງ ສປປ ລາວ ແລະ ລະບຽບການບັນຊີອື່ນໆ ທີ່ກ່ຽວຂ້ອງ ທີ່ໄດ້ກໍານົດໃຊ້ໂດຍ ທະນາຄານແຫ່ງ ສປປ ລາວ.*

ຄະນະອໍານວຍການຂອງສາຂາໄດ້ມີການກະກຽມເອກະສານລາຍງານ ໂດຍອີງຕາມກົດໝາຍວ່າດ້ວຍການບັນຊີຂອງ ສປປ ລາວ ແລະ ກົດລະບຽບທີ່ໄດ້ວາງອອກໂດຍທະນາຄານ ແຫ່ງ ສປປ ລາວ ທີ່ກ່ຽວຂ້ອງກັບການກະກຽມ ແລະ ການນໍາສະເໜີເອກະສານລາຍງານການເງິນ.

### *2.2 ພື້ນຖານການກະກຽມເອກະສານລາຍງານການເງິນ*

ສາຂາບັນທຶກບັນຊີເປັນເງິນກີບ ແລະ ໄດ້ກະກຽມເອກະສານລາຍງານການເງິນເປັນຫົວໜ່ວຍລ້ານກີບ ("ລ້ານກີບ") ໂດຍອີງຕາມດໍາລັດເລກທີ 02/ນຍ ຂອງນາຍົກລັດຖະມົນຕີ ແຫ່ງ ສປປ ລາວ ລົງວັນທີ 22 ມີນາ 2000 ແລະ ກົດໝາຍການບັນຊີຂອງ ສປປ ລາວ ແລະ ລະບຽບການທີ່ກໍານົດໃຊ້ໂດຍ ທະນາຄານ ແຫ່ງ ສປປ ລາວ ທີ່ກ່ຽວຂ້ອງກັບການກະກຽມ ແລະ ການນໍາສະເໜີເອກະສານລາຍງານການເງິນ.

ເອກະສານລາຍງານການເງິນສະບັບນີ້ໄດ້ຖືກກະກຽມໂດຍນໍາໃຊ້ ຫຼັກການ, ຂັ້ນຕອນ ແລະ ການລາຍງານທາງການບັນຊີທີ່ຖືກຍອມຮັບໃນ ສປປ ລາວ. ດັ່ງນັ້ນ ເອກະສານລາຍງານການເງິນ ແລະ ບົດອະທິບາຍຊ້ອນທ້າຍໃນເອກະສານລາຍງານ ແມ່ນບໍ່ໄດ້ສ້າງຂຶ້ນສໍາລັບທ່ານທີ່ບໍ່ໄດ້ຮັບຮູ້ຫຼັກການບັນຊີ, ຂັ້ນຕອນ ແລະ ການປະຕິບັດການບັນຊີຂອງລາວ. ນອກນັ້ນ ເອກະສານລາຍງານການເງິນສະບັບນີ້ບໍ່ມີຈຸດປະສົງເພື່ອນໍາສະເໜີຖານະການເງິນ, ຜົນຂອງການດໍາເນີນງານ ແລະ ກະແສເງິນສົດອີງຕາມຫຼັກການບັນຊີ ແລະ ການປະຕິບັດການບັນຊີທີ່ຍອມຮັບໄດ້ຂອງປະເທດອື່ນນອກຈາກ ສປປ ລາວ.

### *2.3 ປີການບັນຊີ*

ປີການບັນຊີຂອງສາຂາແມ່ນເລີ່ມແຕ່ວັນທີ 1 ມັງກອນ ແລະ ສິ້ນສຸດ ວັນທີ 31 ທັນວາ.

### *2.4 ການຮັບຮູ້ລາຍຮັບ ແລະ ລາຍຈ່າຍດອກເບ້ຍ*

ລາຍຮັບ ແລະ ລາຍຈ່າຍດອກເບ້ຍໄດ້ຖືກຮັບຮູ້ໃນໃບລາຍງານຜົນໄດ້ຮັບ ໂດຍອີງຕາມຫຼັກການແບບຄ້າງຮັບຄ້າງຈ່າຍ ທີ່ນໍາໃຊ້ວິທີການຄິດໄລ່ແບບສະເໝີຕົວ ແລະ ອັດຕາດອກເບ້ຍທີ່ຖືກກໍານົດໄວ້ໃນສັນຍາເງິນກູ້ ແລະ ເງິນຝາກຂອງລູກຄ້າ.

ການຮັບຮູ້ລາຍຮັບດອກເບ້ຍຄ້າງຮັບຈະຖືກລະງັບກໍ່ຕໍ່ເມື່ອເງິນກູ້ກາຍເປັນໜີ້ທີ່ບໍ່ເກີດດອກອອກຜົນ ຫຼື ເມື່ອຜູ້ບໍລິຫານ ເຊື່ອວ່າຜູ້ກູ້ຢືມບໍ່ມີຄວາມສາມາດຊໍາລະຄືນໄດ້ທັງຕົ້ນທຶນ ແລະ ດອກເບ້ຍ. ລາຍຮັບດອກເບ້ຍເງິນກູ້ດັ່ງກ່າວແມ່ນໄດ້ຖືກບັນທຶກເຂົ້າໃນໃບລາຍງານຜົນໄດ້ຮັບກໍ່ຕໍ່ເມື່ອໄດ້ຮັບເງິນຕົວຈິງ.

## 2. ສະຫລຸບນະໂຍບາຍການບັນຊີທີ່ສໍາຄັນ (ຕໍ່)

### *2.5 ການຮັບຮູ້ລາຍຮັບຄ່າທໍານຽມ ແລະ ຄ່ານາຍໜ້າ*

ຄ່າທໍານຽມ ແລະ ຄ່ານາຍໜ້າ ປະກອບດ້ວຍຄ່າທໍານຽມທີ່ໄດ້ຮັບຈາກການໂອນທຶນ (ລວມທັງການຊໍາລະແຊັກ), ຄ່າທໍານຽມທີ່ເກີດຂຶ້ນຈາກການແລກປ່ຽນເງິນຕາຕ່າງປະເທດ, ຄ່າທໍານຽມທີ່ເກີດຂຶ້ນຈາກການຄໍ້າປະກັນທາງການເງິນ.

ລາຍຮັບຈາກຄ່າທໍານຽມ ແລະ ຄ່ານາຍໜ້າໄດ້ຖືກຮັບຮູ້ໃນໃບລາຍງານຜົນໄດ້ຮັບບົນພື້ນຖານການຖືຫຼັກການບັນຊີເງິນສົດ.

### *2.6 ເງິນສົດ ແລະ ທຽບເທົ່າເງິນສົດ*

ເງິນສົດ ແລະ ທຽບເທົ່າເງິນສົດແມ່ນລວມມີເງິນສົດ ແລະ ການລົງທຶນໄລຍະສັ້ນທີ່ມີສະພາບຄ່ອງສູງ ເຊິ່ງມີກໍານົດບໍ່ເກີນ 30 ວັນທີ່ສາມາດປ່ຽນເປັນເງິນສົດໄດ້ໃນທັນທີ ແລະ ບັນຊີເງິນຝາກຢູ່ກັບທະນາຄານອື່ນທີ່ມີກໍານົດບໍ່ເກີນ 30 ວັນ.

### *2.7 ເງິນໃຫ້ກູ້ຢືມໃຫ້ແກ່ລູກຄ້າ*

ເງິນໃຫ້ກູ້ຢືມໃຫ້ແກ່ລູກຄ້າ ແມ່ນຖືກຮັບຮູ້ຕາມຕົ້ນທຶນ ແລະ ຖືກລາຍງານຕາມຍອດຄ້າງຊໍາລະ ລົບໃຫ້ເງິນແຮສະເພາະສໍາລັບເງິນກູ້ຢືມທີ່ບໍ່ເກີດດອກອອກຜົນ ສໍາລັບປີທີ່ສິ້ນສຸດ ວັນທີ 31 ທັນວາ ປີ 2014.

### *2.8 ເງິນແຮສໍາລັບເງິນໃຫ້ກູ້ຢືມແກ່ລູກຄ້າ*

ອີງຕາມຂໍ້ຕົກລົງເລກທີ 324/ທຫລ ໂດຍທະນາຄານແຫ່ງ ສປປ ລາວ ລົງວັນທີ 19 ເມສາ 2011. ໄດ້ກໍານົດໃຫ້ສາຂາໃຫ້ມີການຈັດຊັ້ນເງິນກູ້ ແລະ ຫັກເງິນແຮສໍາລັບຄ່າເຊື່ອມມູນຄ່າເງິນກູ້. ດັ່ງນັ້ນ, ເງິນກູ້ຈະຖືກຈັດຊັ້ນເປັນເງິນກູ້ທີ່ເກີດດອກອອກຜົນ ຫຼື ເງິນກູ້ທີ່ບໍ່ເກີດດອກອອກຜົນ ອີງຕາມການຊໍາລະຄືນດອກເບ້ຍ ແລະ ປັດໄຈທາງດ້ານຄຸນນະພາບອື່ນໆ. ເງິນກູ້ທີ່ຖືກຈັດປະເພດເປັນໜີ້ປົກກະຕິ (ກຸ່ມ A) ຫຼື ໜີ້ຄວນເອົາໃຈໃສ່ (ກຸ່ມ B) ຈະຖືກພິຈາລະນາເປັນເງິນກູ້ທີ່ເກີດດອກອອກຜົນ. ເງິນກູ້ທີ່ຖືກຈັດຊັ້ນເປັນໜີ້ຕໍ່າກວ່າມາດຕະຖານ (ກຸ່ມ C) ຫຼື ສົງໄສ (ກຸ່ມ D) ແລະ ໜີ້ສູນ (ກຸ່ມ E) ແມ່ນໄດ້ຖືກພິຈາລະນາເປັນເງິນກູ້ທີ່ບໍ່ເກີດດອກອອກຜົນ.

ອີງຕາມຂໍ້ກໍານົດເລກທີ 324/ທຫລ ເງິນແຮສໍາລັບເງິນກູ້ບໍ່ເກີດດອກອອກຜົນ ແມ່ນໄດ້ຖືກສ້າງຂຶ້ນໂດຍການຄິດໄລ່ເອົາຍອດເຫຼືອຄ້າງຊໍາລະເງິນກູ້ແຕ່ລະລາຍການ ຄູນໃຫ້ອັດຕາເງິນແຮທີ່ໄດ້ນໍາໃຊ້ສໍາລັບການຈັດຊັ້ນເງິນກູ້ຄືດັ່ງລຸ່ມນີ້:

| ກຸ່ມ | ຈັດຊັ້ນໜີ້ | ອັດຕາເງິນແຮ |
|---|---|---|
| C | ໜີ້ຕໍ່າກວ່າມາດຕະຖານ | 20% |
| D | ໜີ້ສົງໃສ | 50% |
| E | ໜີ້ສູນ | 100% |

## 2. ສະຫລຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

### *2.8 ເງິນແຮສຳລັບເງິນໃຫ້ກູ້ຢືມແກ່ລູກຄ້າ (ຕໍ່)*

ການປ່ຽນແປງເງິນແຮສຳລັບໜີ້ຕ້ອງຮັບທວງຍາກແມ່ນໄດ້ຖືກບັນທຶກຢູ່ໃນໃບລາຍງານຜົນໄດ້ຮັບເປັນ "ລາຍຈ່າຍເງິນແຮສຳລັບໜີ້ຕ້ອງຮັບທວງຍາກ" ຫຼື "ເກັບຄືນເງິນແຮສຳລັບໜີ້ຕ້ອງຮັບທວງຍາກ ". ເງິນແຮສະສົມສຳລັບໜີ້ຕ້ອງຮັບທວງຍາກ ແມ່ນໄດ້ຖືກບັນທຶກລົງ ໃນໃບສະຫຼຸບຊັບສົມບັດແຍກຕ່າງຫາກເປັນ "ເງິນກູ້ (ເງິນແຮສຳລັບໜີ້ຕ້ອງຮັບທວງຍາກ)".

ລາຍລະອຽດກ່ຽວກັບການຈັດຊັ້ນໜີ້ ແລະ ເງິນແຮສຳລັບໜີ້ຕ້ອງຮັບທວງຍາກ ແລະ ຈຳນວນເງິນແຮທີ່ສາຂາໄດ້ບັນທຶກຕົວຈິງ ໃນວັນທີ 31 ທັນວາ 2014 ແມ່ນໄດ້ລາຍງານຢູ່ໃນບົດອະທິບາຍເລກທີ 12.2.

### *2.9 ເງິນແຮທົ່ວໄປສຳລັບເງິນກູ້*

ອີງຕາມຂໍ້ຕົກລົງຂອງທະນາຄານແຫ່ງ ສປປ ລາວ ເລກທີ 324/ທຫລ, ໄດ້ກຳນົດໃຫ້ສາຂາຕ້ອງຫັກເງິນແຮທົ່ວໄປສຳລັບການສູນເສຍເງິນກູ້ລວມໃນອັດຕາ 3.00% ຂອງຍອດເຫຼືອລວມໜີ້ຄ່ອນເອົາໃຈໃສ່ ນະວັນທີສ້າງໃບສະຫຼຸບຊັບສົມບັດ ແລະ ເງິນແຮທົ່ວໄປສຳລັບໜີ້ປົກກະຕິແມ່ນຈະອີງຕາມການແຈ້ງການຂອງ ທຫລ ໃນແຕ່ລະປີ. ສຳລັບປີສິ້ນສຸດ ວັນທີ 31 ທັນວາ 2014, ອັດຕາເງິນແຮທົ່ວໄປສຳລັບໜີ້ປົກກະຕິແມ່ນຢູ່ໃນລະຫວ່າງ 0.50 ຫາ 1.00% ໂດຍອີງຕາມໜັງສືແຈ້ງການສະບັບເລກທີ 242/ທຫລ ອອກໂດຍທະນາຄານແຫ່ງ ສປປ ລາວ ລົງວັນທີ 02 ເມສາ 2011. ດັ່ງນັ້ນ, ສາຂາໄດ້ຫັກເງິນແຮທົ່ວໄປໃນອັດຕາ 0.50% ຂອງຍອດລວມໜີ້ປົກກະຕິ.

ສາຂາໄດ້ປະຕິບັດຕາມລະບຽບການຂອງ ທະນາຄານແຫ່ງ ສປປ ລາວ ກ່ຽວກັບເງິນແຮທົ່ວໄປທີ່ໄດ້ຫັກສຳລັບໜີ້ປົກກະຕິ ແລະ ໜີ້ຄ່ອນເອົາໃຈໃສ່ສຳລັບປີສິ້ນສຸດ 31 ທັນວາ 2014.

ອີງຕາມລະບຽບການບັນຊີທີ່ກ່ຽວຂ້ອງອອກໂດຍທະນາຄານແຫ່ງ ສປປ ລາວ, ການປ່ຽນແປງຂອງເງິນແຮທົ່ວໄປສຳລັບກິດຈະກຳສິນເຊື່ອແມ່ນໄດ້ບັນທຶກລົງໃນໃບລາຍງານຜົນໄດ້ຮັບເປັນ "ລາຍຈ່າຍຈາກການດຳເນີນງານອື່ນໆ" ສຳລັບລາຍຈ່າຍເງິນແຮທົ່ວໄປ ແລະ "ລາຍຮັບຈາກການດຳເນີນງານອື່ນໆ", ສຳລັບການເກັບຄືນລາຍຈ່າຍເງິນແຮທົ່ວໄປ ແລະ ເງິນແຮທົ່ວໄປແມ່ນໄດ້ຖືກບັນທຶກຢູ່ໃນໃບສະຫຼຸບຊັບສົມບັດເປັນ "ເງິນແຮທົ່ວໄປສຳລັບກິດຈະກຳສິນເຊື່ອ" ຢູ່ໃນທຶນ ແລະ ຄັງສະສົມຂອງສາຂາ.

ລາຍລະອຽດການປ່ຽນແປງ ຂອງເງິນແຮທົ່ວໄປ ແມ່ນຖືກແຈ້ງໄວ້ຢູ່ໃນບົດອະທິບາຍເລກທີ 12.2.

**2. ສະຫລຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)**

## *2.10 ຊັບສິນບັດຄົງທີ່*

ຊັບສິນບັດຄົງທີ່ລວມມີຊັບສິນບັດຄົງທີ່ມີຕົວຕົນ ແລະ ບໍ່ມີຕົວຕົນ. ຊັບສິນບັດຄົງທີ່ມີຕົວຕົນປະກອບມີ: ອາຄານ ແລະ ການປັບປຸງ, ເຄື່ອງໃຊ້ຫ້ອງການ, ພາຫານະ ແລະ ເຟີນີເຈີ ແລະ ເຄື່ອງຕົບແຕ່ງ. ຊັບສິນບັດຄົງທີ່ບໍ່ມີຕົວຕົນປະກອບມີ: ຊອບແວຄອມພິວເຕີ ແລະ ສິດນຳໃຊ້ທີ່ດິນ.

ຊັບສິນບັດຄົງທີ່ໄດ້ຖືກລາຍງານຕາມຕົ້ນທຶນ ລົບໃຫ້ ຄ່າຫລຸ້ຍຫ້ຽນສະສົມ ຫລື ຄ່າເຊື່ອມສະສົມ, ຖ້າມີ.

ຕົ້ນທຶນຂອງຊັບສິນບັດປະກອບດ້ວຍ ມູນຄ່າຊື້ ບວກກັບຄ່າໃຊ້ຈ່າຍທີ່ກ່ຽວຂ້ອງທາງກົງອື່ນໆ ໃນການເຮັດໃຫ້ຊັບສິນຢູ່ໃນສະພາບທີ່ພ້ອມໃຊ້ງານ.

ບັນດາຄ່າໃຊ້ຈ່າຍສຳລັບການຊື້ເພີ່ມເຕີມ, ການປັບປຸງ ແລະ ການຕໍ່ອາຍຸ ຈະຖືກຈົດເຂົ້າເປັນທຶນ ແລະ ລາຍຈ່າຍສຳລັບຄ່າບຳລຸງຮັກສາ ແລະ ສ້ອມແປງ ຈະຖືກຈົດເຂົ້າ ແລະ ສະແດງຢູ່ໃນບົດລາຍງານຜົນໄດ້ຮັບ, ຖ້າມີ.

ເມື່ອຊັບສິນບັດຖືກຂາຍ ຫລື ສະສາງອອກ, ຕົ້ນທຶນ ແລະ ຄ່າຫລຸ້ຍຫ້ຽນສະສົມຈະຖືກຍ້າຍອອກຈາກໃບສະຫຼຸບຊັບສິນບັດ ແລະ ສ່ວນຕ່າງຈາກກຳໄລ ຫລື ຂາດທຶນຈາກການສະສາງຈະຖືກບັນທຶກຢູ່ໃນໃບລາຍງານຜົນໄດ້ຮັບ

## *2.11 ຄ່າຫລຸ້ຍຫ້ຽນ ແລະ ຄ່າເສື່ອມ*

ການຫັກຄ່າຫລຸ້ຍຫ້ຽນ ແລະ ການຫັກຄ່າເຊື່ອມຂອງຊັບສິນບັດຄົງທີ່ຖືກຄິດໄລ່ສະໝໍ່າສະເໝີທີ່ສະແດງອັດຕາກັບອາຍຸການນຳໃຊ້ທີ່ສອດຄ່ອງກັບກົດໝາຍສ່ວຍສາອາກອນຂອງລາວສະບັບເລກທີ 05/ສພຊ, ລົງວັນທີ 20 ທັນວາ 2011 ເຊິ່ງມີຜົນນຳໃຊ້ນັບແຕ່ ແລະ ພາຍຫລັງວັນທີ 01 ມັງກອນ 2013 ອອກໂດຍປະທານສະພາແຫ່ງຊາດ. ອັດຕາປະຈຳປີທີ່ນຳໃຊ້ມີດັ່ງລຸ່ມນີ້:

| | |
|---|---|
| ສິດທິການໃຊ້ທີ່ດິນ (*) | ບໍ່ຫັກຄ່າຫລຸ້ຍຫ້ຽນ |
| ຊອບແວ | 50% |
| ອາຄານ ແລະ ສິ່ງປັບປຸງ | 5% |
| ອຸປະກອນສຳນັກງານ | 20% |
| ພາຫະນະ | 20% |
| ເຟີນີເຈີ ແລະ ເຄື່ອງຕົບແຕ່ງ | 20% |

*(*): ຕົ້ນທຶນຂອງສິດນຳໃຊ້ທີ່ດິນແມ່ນບໍ່ມີການຫັກຄ່າເຊື່ອມເນື່ອງຈາກບໍ່ມີການກຳນົດອາຍຸການນາໃຊ້*

## 2. ສະຫລຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

### *2.12 ຄັງສຳຮອງຕາມລະບຽບການ*

ພາຍໃຕ້ຂໍ້ກຳນົດຂອງກົດໝາຍວ່າດ້ວຍທະນາຄານທຸລະກິດ ລົງວັນທີ 16 ມັງກອນ 2007, ໄດ້ກຳນົດໃຫ້ສາຂາຂອງທະນາຄານທຸລະກິດຕ່າງປະເທດຕ້ອງຮັກສາກຳໄລສຸດທິຕາມຄັງສະສົມດັ່ງຕໍ່ໄປນີ້:

- ຄັງແຮຕາມລະບຽບການ,
- ຄັງຂະຫຍາຍທຸລະກິດ ແລະ ຄັງອື່ນໆ

ອີງຕາມລະບຽບການກ່ຽວກັບຄວາມພຽງພໍຂອງທຶນ ສະບັບເລກທີ 01/ທຫລ ລົງວັນທີ 28 ສິງຫາ 2002 ເຊິ່ງອອກໂດຍທະນາຄານແຫ່ງ ສປປ ລາວ ແລະ ເອກະສານແນະນຳອື່ນໆທີ່ກ່ຽວຂ້ອງ, ສາຂາທະນາຄານຕ່າງປະເທດແມ່ນຕ້ອງໄດ້ມີຄັງສຳຮອງຕາມລະບຽບການໃນອັດຕາລະຫວ່າງ 5% ຫາ 10% ຂອງກຳໄລຫຼັງຫັກອາກອນ ໂດຍອີງຕາມຄວາມເຫັນດີຂອງສະພາບໍລິຫານ.

ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2014, ສາຂາໄດ້ຈັດແບ່ງເງິນແຮຕາມລະບຽບການ ດັ່ງນີ້:

| | % ຂອງກຳໄລຫຼັງອາກອນ | ຍອດສູງສຸດ |
|---|---|---|
| ຄັງສຳຮອງຕາມລະບຽບການ | 10% | ບໍ່ຈຳກັດ |
| ຄັງຂະຫຍາຍທຸລະກິດ | 0% | ບໍ່ຈຳກັດ |

### *2.13 ລາຍການເຄື່ອນໄຫວທີ່ເປັນເງິນຕາຕ່າງປະເທດ*

ສາຂາຮັກສາລະບົບການບັນຊີ ແລະ ການບັນທຶກລາຍການເຄື່ອນໄຫວທັງໝົດໃນສະກຸນເງິນເດີມ. ຊັບສິນທາງການເງິນ ແລະ ໜີ້ສິນ ທີ່ເປັນເງິນຕາຕ່າງປະເທດໄດ້ຖືກຕີມູນຄ່າຢູ່ທ້າຍປີ ມາເປັນ ສະກຸນເງິນກີບ ດ້ວຍອັດຕາແລກປ່ຽນ ໃນມື້ສ້າງໃບສະຫລຸບຊັບສິນບັດ (ລາຍລະອຽດອັດຕາແລກປ່ຽນເງິນຕາຕ່າງປະເທດທຽບໃສ່ເງິນກີບໃນ ວັນທີ 31 ທັນວາ 2014 ແມ່ນໄດ້ສະເໜີໃຫ້ເຫັນຂ້າງລຸ່ມ). ລາຍຮັບ ແລະ ລາຍຈ່າຍທີ່ເປັນເງິນຕາຕ່າງປະເທດໃນປີ ແມ່ນຖືກຕີມູນຄ່າເປັນສະກຸນເງິນກີບ ໂດຍອັດຕາແລກປ່ຽນໃນມື້ລາຍການເຄື່ອນໄຫວ. ສ່ວນຕ່າງລະຫວ່າງການຕີມູນຄ່າຈາກອັດຕາແລກປ່ຽນຊັບສິນ ແລະ ໜີ້ສິນທາງການເງິນໃນມື້ສ້າງໃບສະຫລຸບຊັບສິນບັດ ຖືກຮັບຮູ້ຢູ່ໃນໃບລາຍງານຜົນໄດ້ຮັບ.

| | *31 ທັນວາ 2014*<br>*ລ້ານກີບ* | *31 ທັນວາ 2013*<br>*ລ້ານກີບ* |
|---|---|---|
| ໂດລາສະຫະລັດ | 8,088 | 8,013 |
| ບາດ | 246.49 | 250.11 |

## 2. ສະຫລຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

### *2.14 ອາກອນ*

ເງິນແຮໄດ້ຖືກສ້າງຂຶ້ນສຳລັບອາກອນກຳໄລໃນປີປະຈຸບັນ, ໂດຍອີງຕາມລະບຽບການຄຸ້ມຄອງການເກັບອາກອນໃນ ສປປ ລາວ. ທາງສາຂາຕ້ອງຈ່າຍອາກອນໃນອັດຕາ 24% ຂອງກຳໄລກ່ອນອາກອນ ໂດຍອີງຕາມກົດໝາຍສ່ວຍສາອາກອນ ສະບັບເລກທີ 05/ ສພຊ ລົງວັນທີ 20 ທັນວາ 2011, ເຊິ່ງມີຜົນສັກສິດນັບຕັ້ງແຕ່ 1 ມັງກອນ 2013. ອາກອນຂອງສາຂາຕ້ອງໄດ້ຮັບການກວດກາໂດຍເຈົ້າໜ້າທີ່ສ່ວຍສາອາກອນ, ເນື່ອງຈາກການນຳໃຊ້ກົດໝາຍສ່ວຍສາອາກອນ ແລະ ລະບຽບການຕ່າງໆແມ່ນມີຫລາຍປະເພດເຊິ່ງອາດຈະແປຄວາມໄດ້ເປັນຫລາຍຢ່າງ, ຈຳນວນທີ່ໄດ້ຖືກລາຍງານຢູ່ໃນເອກະສານລາຍງານການເງິນອາດຈະມີການປ່ຽນແປງຂຶ້ນກັບການໄລ່ລຽງຂອງເຈົ້າໜ້າທີ່ສ່ວຍສາອາກອນ.

### *2.15 ຜົນປະໂຫຍດພະນັກງານ*

*ຜົນປະໂຫຍດຫລັງການຈ້າງງານ*

ຜົນປະໂຫຍດຫລັງການຈ້າງງານຈະຈ່າຍໃຫ້ແກ່ພະນັກງານອອກບຳນານຂອງສາຂາ ໂດຍພະແນກຄັງປະກັນສັງຄົມທີ່ຂຶ້ນກັບກະຊວງແຮງງານ ແລະ ສະຫວັດດີການສັງຄົມ. ສາຂາໄດ້ຖືກກຳນົດໃຫ້ປະກອບສ່ວນໃຫ້ແກ່ຜົນປະໂຫຍດຂອງພະນັກງານຫຼັງອອກການ ໂດຍການຈ່າຍປະກັນໄພໃຫ້ແກ່ປະກັນສັງຄົມໃນອັດຕາ 5% ຂອງເງິນເດືອນພື້ນຖານ. ສາຂາບໍ່ມີພັນທະກ່ຽວກັບຜົນປະໂຫຍດຂອງພະນັກງານຫຼັງອອກການນອກເໜືອຈາກນີ້.

*ຜົນປະໂຫຍດພາຍຫຼັງຍົກເລີກສັນຍາຈ້າງງານ*

ອີງຕາມມາດຕາ 29 ຂອງກົດໝາຍວ່າດ້ວຍແຮງງານສະບັບປັບປຸງທີ່ອອກໂດຍປະທານປະເທດຂອງ ສປປ ລາວ ໃນວັນທີ 16 ມັງກອນປີ 2007, ສາຂາມີພັນທະຈ່າຍເງິນຊົດເຊີຍໃຫ້ພະນັກງານຜູ້ທີ່ຖືກເລີກຈ້າງຍ້ອນກໍລະນີດັ່ງລຸ່ມນີ້:

- ເມື່ອພະນັກງານຂາດທັກສະຄວາມຊ່ຽວຊານ ຫຼື ບໍ່ມີສຸຂະພາບແຂງແຮງ ດັ່ງນັ້ນ ຈຶ່ງບໍ່ສາມາດສືບຕໍ່ເຮັດວຽກໄດ້;
- ເມື່ອນາຍຈ້າງຫາກໄດ້ພິຈາລະນາວ່າ ມີຄວາມຈຳເປັນຈະຕ້ອງໄດ້ຫລຸດຈຳນວນພະນັກງານລົງເພື່ອປັບປຸງໂຄງສ້າງວຽກງານພາຍໃນໜ່ວຍງານ.

ສຳລັບການຍົກເລີກສັນຍາຈ້າງງານໃນຂົງເຂດທີ່ໄດ້ກ່າວມາຂ້າງເທິງນັ້ນ, ນາຍຈ້າງຕ້ອງຈ່າຍເງິນອຸດໜູນເທື່ອດຽວໃຫ້ພະນັກງານໂດຍອີງໃສ່ພື້ນຖານການຄິດໄລ່ 10% ຂອງເງິນເດືອນພື້ນຖານກ່ອນເລີກຈ້າງຄູນໃຫ້ຈຳນວນເດືອນເຮັດວຽກນາຍຈ້າງສຳລັບຜູ້ທີ່ເຮັດວຽກຕ່ຳກວ່າ 3 ປີ. ສຳລັບຜູ້ທີ່ເຮັດວຽກເກີນ 3 ປີ ພື້ນຖານຄິດໄລ່ແມ່ນ 15% ຂອງເງິນເດືອນພື້ນຖານ, ນະວັນທີ 31 ທັນວາ 2014 ຍັງບໍ່ມີພະນັກງານຂອງສາຂາຜູ້ໃດທີ່ຖືກເລີກຈ້າງຍ້ອນສາເຫດທີ່ໄດ້ກ່າວມາຂ້າງເທິງນັ້ນ. ສະນັ້ນ, ທາງສາຂາແມ່ນບໍ່ໄດ້ຕັ້ງເງິນຊົດເຊີຍການເລີກຈ້າງໃນເອກະສານລາຍງານການເງິນ.

## 3 ລາຍຮັບສຸດທິຈາກດອກເບ້ຍ ແລະ ລາຍຮັບທີ່ຄ້າຍຄືກັນ

| | *2014* | *2013* |
|---|---|---|
| | *ລ້ານກີບ* | *ລ້ານກີບ* |
| **ລາຍຮັບດອກເບ້ຍ ແລະ ລາຍຮັບທີ່ຄ້າຍຄືກັນ** | **60,101** | **58,508** |
| ລາຍຮັບດອກເບ້ຍເງິນຝາກກັບທະນາຄານອື່ນ | 494 | 1,462 |
| ລາຍຮັບດອກເບ້ຍຈາກເງິນກູ້ແກ່ລູກຄ້າ | 59,607 | 56,609 |
| ດອກເບ້ຍຈາກພັນທະບັດ | - | 437 |
| **ລາຍຈ່າຍດອກເບ້ຍ ແລະ ລາຍຈ່າຍທີ່ຄ້າຍຄືກັນ** | **(24,383)** | **(19,426)** |
| ລາຍຈ່າຍດອກເບ້ຍການສຳລັບທະນາຄານອື່ນ | (2,395) | (4,435) |
| ລາຍຈ່າຍດອກເບ້ຍຈາກເງິນຝາກຂອງລູກຄ້າ | (21,988) | (14,991) |
| **ລາຍຮັບສຸດທິຈາກດອກເບ້ຍ ແລະ ລາຍຮັບທີ່ຄ້າຍຄືກັນ** | **35,718** | **39,082** |

## 4 ລາຍຮັບຈາກຄ່າທຳນຽມ ແລະ ຄ່າບໍລິການ

| | *2014* | *2013* |
|---|---|---|
| | *ລ້ານກີບ* | *ລ້ານກີບ* |
| **ລາຍຮັບຄ່າທຳນຽມ ແລະ ບໍລິການຈາກ:** | | |
| ຄ່າທຳນຽມຈາກການສະສາງ | 1,489 | 1,790 |
| ສິນເຊື່ອການຄ້າລະຫວ່າງປະເທດ | 2,312 | 2,479 |
| | **3,801** | **4,269** |

## 5 ກຳໄລສຸດທິຈາກການຊື້ຂາຍເງິນຕາຕ່າງປະເທດ

| | *2014* | *2013* |
|---|---|---|
| | *ລ້ານກີບ* | *ລ້ານກີບ* |
| ລາຍຮັບຈາກການຊື້ຂາຍເງິນຕາຕ່າງປະເທດ | 1,905 | 2,056 |
| ລາຍຈ່າຍຈາກການຊື້ຂາຍເງິນຕາຕ່າງປະເທດ | (208) | (1,469) |
| **ກຳໄລສຸດທິຈາກການຊື້ຂາຍເງິນຕາຕ່າງປະເທດ** | **1,697** | **587** |

ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ (ຕໍ່)
ນະວັນທີ ແລະ ສໍາລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2014

## 6 ລາຍຮັບຈາກການດໍາເນີນງານອື່ນໆ

| | *2014*<br>*ລ້ານກີບ* | *2013*<br>*ລ້ານກີບ* |
|---|---|---|
| ຄ່າທໍານຽມຈາກການບໍລິການດ້ານການທະນາຄານ | 154 | 532 |
| ເກັບຄືນລາຍຈ່າຍເງິນແຮທົ່ວໄປສໍາລັບໜີ້ເສຍ *(ບົດອະທິບາຍ ເລກທີ 12.2)* | 442 | - |
| ອື່ນໆ | 142 | 40 |
| | **738** | **572** |

## 7 ເງິນເດືອນ ແລະ ລາຍຈ່າຍອື່ນໆທີ່ກ່ຽວພັນກັບພະນັກງານ

| | *2014*<br>*ລ້ານກີບ* | *2013*<br>*ລ້ານກີບ* |
|---|---|---|
| ຄ່າແຮງງານ ແລະ ເບັ້ຍລ້ຽງ | 6,868 | 6,397 |
| ປະກັນໄພສັງຄົມ | 248 | 215 |
| ລາຍຈ່າຍຝຶກອົບຮົມ | 33 | 24 |
| ອື່ນໆ | 343 | 99 |
| | **7,492** | **6,735** |

## 8 ລາຍຈ່າຍໃນການບໍລິຫານງານອື່ນໆ

| | *2014*<br>*ລ້ານກີບ* | *2013*<br>*ລ້ານກີບ* |
|---|---|---|
| ຄ່າສ້ອມແປງ ແລະ ບໍາລຸງຮັກສາ | 1,768 | 1,825 |
| ຄ່າໂຄສະນາ, ການຕະຫຼາດ ແລະ ການສົ່ງເສີມການຂາຍ | 2,320 | 1,347 |
| ຄ່າເຊົ່າຫ້ອງການ | 1,555 | 1,319 |
| ຄ່າໂທລະຄົມມະນາຄົມ | 1,075 | 665 |
| ລາຍຈ່າຍໃນການຝຶກອົບຮົມ, ປະຊຸມ ແລະ ສໍາມະນາ | 79 | 55 |
| ລາຍຈ່າຍຄ່າພາຫະນະ | 745 | 742 |
| ລາຍຈ່າຍຄ່າອຸປະກອນ | 228 | 207 |
| ລາຍຈ່າຍທາງດ້ານກົດໝາຍ ແລະ ການກວດສອບ | 97 | 116 |
| ລາຍຈ່າຍອື່ນໆ | 989 | 948 |
| | **8,856** | **7,224** |

## 9 ລາຍຈ່າຍການດຳເນີນງານອື່ນໆ

| | *2014* *ລ້ານກີບ* | *2013* *ລ້ານກີບ* |
|---|---|---|
| ເງິນແຮສຳລັບເງິນໃຫ້ກູ້ຢືມແກ່ທະນາຄານອື່ນ ແລະ ລູກຄ້າ (ບົດອະທິບາຍ ເລກທີ 12.2) | - | 878 |
| ຈ່າຍຄ່າປະກັນໃຫ້ແກ່ກອງທຶນປົກປ້ອງຜູ້ຝາກເງິນ | 394 | 256 |
| | **394** | **1,134** |

## 10 ເງິນສົດ ແລະ ເງິນຝາກໃນທະນາຄານແຫ່ງ ສປປ ລາວ

| | *31/12/2014* *ລ້ານກີບ* | *31/12/2013* *ລ້ານກີບ* |
|---|---|---|
| **ເງິນສົດໃນຄັງ** | **14,776** | **28,060** |
| ເງິນສົດໃນຄັງສະກຸນເງິນກີບ | 7,040 | 12,147 |
| ເງິນສົດໃນຄັງສະກຸນເງິນຕ່າງປະເທດ | 7,736 | 15,913 |
| **ເງິນຝາກກັບທະນາຄານແຫ່ງ ສປປ ລາວ** | **116,912** | **58,230** |
| ເງິນຝາກກະແສລາຍວັນ | 102,363 | 43,173 |
| ເງິນຝາກບັງຄັບ | 14,544 | 15,052 |
| ເງິນຝາກທຶນຈົດທະບຽນ | 5 | 5 |
| | **131,688** | **86,290** |

ຍອດບັນຊີເງິນຝາກຢູ່ທະນາຄານແຫ່ງ ສປປ ລາວ ແມ່ນ ບໍ່ມີດອກເບ້ຍ.

ພາຍໃຕ້ຂໍ້ກຳນົດຂອງ ທຫລ, ທະນາຄານໄດ້ຖືກຮຽກຮ້ອງໃຫ້ຮັກສາຄັງແຮເງິນສົດໄວ້ກັບທະນາຄານ ແຫ່ງ ສປປ ລາວ ໃນຮູບແບບເງິນຝາກພາກບັງຄັບ ເຊິ່ງຄິດໄລ່ໃນອັດຕາ 5.00% ແລະ 10.00% ສຳລັບເງິນຕາຕ່າງປະເທດ ໃນທຸກໆ 2 ຄັ້ງຕໍ່ເດືອນ (2013: 5.00% ແລະ 10.00%) ຂອງຍອດເງິນຝາກລູກຄ້າທີ່ມີກຳນົດຕ່ຳກ່ວາ 12 ເດືອນ.

ພາຍໃນປີທະນາຄານໄດ້ຮັກສາເງິນຝາກພາກບັງຄັບເພື່ອໃຫ້ສອດຄ່ອງຕາມຂໍ້ກຳນົດຂອງທະນາຄານ ແຫ່ງ ສປປ ລາວ.

## 11. ເງິນຝາກກັບທະນາຄານອື່ນ

### *11.1 ເງິນຝາກກະແສລາຍວັນ*

| | *31/12/2014* | *31/12/2013* |
|---|---|---|
| | *ລ້ານກີບ* | *ລ້ານກີບ* |
| **ເງິນຝາກກະແສລາຍວັນກັບທະນາຄານອື່ນ** | **962** | **441** |
| ທະນາຄານ ພັດທະນາລາວ | 962 | 441 |
| **ເງິນຝາກກະແສລາຍວັນກັບທະນາຄານຕ່າງປະເທດ** | **20,132** | **7,853** |
| ທະນາຄານ ຫຸ້ນສ່ວນການຄ້າ ໄຊ່ງ່ອນເທືອງຕື່ນ *( ບົດອະທິບາຍ ເລກທີ 23 )* | 14,973 | 5,883 |
| ທະນາຄານ ຊາຄອມ ກໍາປູເຈຍ | 1 | 49 |
| ທະນາຄານ Wachovia | 5,157 | 1,903 |
| ທະນາຄານຫຸ້ນສ່ວນ ທະຫານ ສາຂາ ກໍາປູເຈຍ | 1 | 18 |
| | **21,094** | **8,294** |

### *11.2 ເງິນຝາກມີກໍານົດ*

| | *31/12/2014* | *31/12/2013* |
|---|---|---|
| | *ລ້ານກີບ* | *ລ້ານກີບ* |
| **ເງິນຝາກມີກໍານົດກັບທະນາຄານອື່ນ** | | |
| ທະນາຄານ ລາວ - ຫວຽດ | - | 13,013 |
| ທະນາຄານຫຸ້ນສ່ວນ ທະຫານ ສາຂາ ລາວ | 23,051 | - |
| | **23,051** | **13,013** |

ເງິນຝາກມີກໍານົດຢູ່ ທະນາຄານ ຫຸ້ນສ່ວນ ທະຫານ ສາຂາ ລາວ ທີມີກໍານົດໄລຍະສອງເດືອນແມ່ນ 12,941 ລ້ານກີບ ແລະ ເງິນຝາກມີກໍານົດໄລຍະ ສາມເດືອນແມ່ນ 10,110 ລ້ານກີບ ແລະ ລາຍຮັບຈາກອັດຕາດອກເບ້ຍ 1,50 % ຕໍ່ປີ.

## 12. ເງິນກູ້ໃຫ້ລູກຄ້າຫຼັງຫັກ ( ເງິນແຮສໍາລັບໜີ້ຕ້ອງຮັບທວງຍາກ )

| | *31/12/2014* | *31/12/2013* |
|---|---|---|
| | *ລ້ານກີບ* | *ລ້ານກີບ* |
| ເງິນກູ້ ສໍາຫຼັບລູກຄ້າ ( ບົດອະທິບາຍເລກທີ 12.1) | 557,504 | 585,317 |
| ລົບໜີ້ຕ້ອງຮັບທວງຍາກ (ບົດອະທິບາຍເລກທີ 12.2) | (232) | - |
| | **557,272** | **585,317** |

12. ເງິນກູ້ໃຫ້ລູກຄ້າທັງໝົດ ( ເງິນແຮສໍາລັບໜີ້ຕ້ອງຮັບທວງຍາກ ) (ຕໍ່)

ອັດຕາດອກເບ້ຍເງິນກູ້ໃຫ້ລູກຄ້າພາຍໃນປີ ມີດັ່ງລຸ່ມນີ້:

| | 2014<br>ອັດຕາດອກເບ້ຍ<br>% ຕໍ່ປີ | 2013<br>ອັດຕາດອກເບ້ຍ<br>% ຕໍ່ປີ |
|---|---|---|
| ເງິນກູ້ ທີ່ເປັນສະກຸນເງິນກີບ | 8.00 - 17.00% | 7.50 - 17.00% |
| ເງິນກູ້ ທີ່ເປັນສະກຸນເງິນໂດລາ | 8.63 - 11.50% | 8.00 - 12.00% |
| ເງິນກູ້ ທີ່ເປັນສະກຸນເງິນບາດ | 7.95 - 11.50% | 7.00 - 12.00% |

### 12.1 *ການວິເຄາະເງິນກູ້ໃຫ້ລູກຄ້າ*

*ການວິເຄາະເງິນກູ້ຕາມສະກຸນເງິນ*

| | 31/12/2014<br>ລ້ານກີບ | 31/12/2013<br>ລ້ານກີບ |
|---|---|---|
| ເງິນກູ້ ແລະ ເງິນລ່ວງໜ້າທີ່ເປັນເງິນກີບ | 441,047 | 424,084 |
| ເງິນກູ້ ແລະ ເງິນລ່ວງໜ້າທີ່ເປັນເງິນໂດລາ | 16,464 | 133,230 |
| ເງິນກູ້ ແລະ ເງິນລ່ວງໜ້າທີ່ເປັນເງິນບາດ | 99,993 | 28,003 |
| | **557,504** | 585,317 |

*ການວິເຄາະເງິນກູ້ຕາມຄຸນນະພາບ*

| | 31/12/2014<br>ລ້ານກີບ | 31/12/2013<br>ລ້ານກີບ |
|---|---|---|
| ເງິນກູ້ທີ່ເກີດດອກອອກຜົນ | 556,344 | 585,317 |
| ເງິນກູ້ທີ່ບໍ່ເກີດດອກອອກຜົນ | 1,160 | - |
| | **557,504** | **585,317** |

*ການວິເຄາະເງິນກູ້ຕາມໄລຍະເງິນກູ້*

| | 31/12/2014<br>ລ້ານກີບ | 31/12/2013<br>ລ້ານກີບ |
|---|---|---|
| ເງິນກູ້ໄລຍະສັ້ນ | 256,080 | 232,777 |
| ເງິນກູ້ໄລຍະກາງ | 61,133 | 70,226 |
| ເງິນກູ້ໄລຍະຍາວ | 240,291 | 282,314 |
| | **557,504** | **585,317** |

## 12. ເງິນກູ້ໃຫ້ລູກຄ້າຫຼັງຫັກ ( ເງິນແຮສຳລັບໜີ້ຕ້ອງຮັບທວງຍາກ ) (ຕໍ່)

### 12.1 *ການວິເຄາະເງິນກູ້ໃຫ້ລູກຄ້າ (ຕໍ່)*

*ການວິເຄາະເງິນກູ້ຕາມປະເພດຂອງອຸດສາຫະກຳ*

| | *31/12/2014* *ລ້ານກີບ* | *31/12/2013* *ລ້ານກີບ* |
|---|---|---|
| ການຄ້າ | 181,362 | 211,156 |
| ການກໍ່ສ້າງ | 70,869 | 49,079 |
| ການຜະລິດ | 82,920 | 40,103 |
| ການບໍລິການ | 162,565 | 207,324 |
| ອື່ນໆ | 59,788 | 77,655 |
| | **557,504** | **585,317** |

### 12.2 *ເງິນແຮສຳລັບໜີ້ເສຍ*

ການເຄື່ອນໄຫວຂອງເງິນແຮ່ສຳລັບໜີ້ສູນຂອງສາຂາ ພາຍໃນປີ 2014 ມີດັ່ງນີ້:

| | *ເງິນແຮໜີ້ທວງຍາກ* *ລ້ານກີບ* | *ເງິນແຮທົ່ວໄປ* *ລ້ານກີບ* | *ລວມ* *ລ້ານກີບ* |
|---|---|---|---|
| **ຍອດເຫຼືອ ນະວັນທີ 1 ມັງກອນ 2014** | - | 3,231 | 3,231 |
| ເງິນແຮທີ່ຈັດເປັນລາຍຈ່າຍສຸດທິ | **227** | **(442)** | **(215)** |
| - *ເງິນແຮທີ່ຈັດເປັນລາຍຈ່າຍໃນປີ* | 6,420 | 8,212 | 14,632 |
| - *ເກັບຄືນເງິນແຮໜີ້ເສຍໃນປີ* | (5,570) | (8,654) | (14,224) |
| - *ການສະສາງເງິນກູ້ທີ່ບໍ່ເກີດດອກອອກຜົນ* | (623) | - | (623) |
| ສ່ວນຜິດດ່ຽງຈາກອັດຕາແລກປ່ຽນເງິນຕາ | 5 | 9 | 14 |
| **ຍອດເຫຼືອທ້າຍປີ ວັນທີ 31 ທັນວາ 2014** | **232** | **2,798** | 3,030 |

ການເຄື່ອນໄຫວຂອງເງິນແຮ່ສຳລັບໜີ້ສູນຂອງສາຂາ ພາຍໃນປີ 2013 ມີດັ່ງນີ້:

| | *ເງິນແຮໜີ້ທວງຍາກ* *ລ້ານກີບ* | *ເງິນແຮທົ່ວໄປ* *ລ້ານກີບ* | *ລວມ* *ລ້ານກີບ* |
|---|---|---|---|
| **ຍອດເຫຼືອ ນະວັນທີ 1 ມັງກອນ 2013** | - | **2,359** | **2,359** |
| ເງິນແຮສຸດທິທີ່ຈັດເປັນລາຍຈ່າຍ | - | 878 | 878 |
| - *ເງິນແຮທີ່ຈັດເປັນລາຍຈ່າຍໃນປີ* | - | 4,538 | 4,538 |
| - *ເກັບຄືນເງິນແຮໜີ້ເສຍໃນປີ* | - | (3,660) | (3,660) |
| ສ່ວນຜິດດ່ຽງຈາກອັດຕາແລກປ່ຽນເງິນຕາ | - | (6) | (6) |
| **ຍອດເຫຼືອທ້າຍປີ ວັນທີ 31 ທັນວາ 2013** | - | **3,231** | **3,231** |

## 12. ເງິນກູ້ໃຫ້ລູກຄ້າຫຼັງຫັກ ( ເງິນແຮສຳລັບໜີ້ຕ້ອງຮັບທວງຍາກ ) (ຕໍ່)

### *12.2 ເງິນແຮສຳລັບໜີ້ເສຍ* (ຕໍ່)

ລາຍລະອຽດຂອງການຈັດຊັ້ນໜີ້ ແລະ ການຫັກເງິນແຮ ແມ່ນຕາມຂໍ້ກຳນົດຂອງ ທຫລ ນະວັນທີ 31 ທັນວາ 2014 ດັ່ງລຸ່ມນີ້:

| *ການຈັດຊັ້ນ* | *ຍອດເຫຼືອເງິນກູ້ ລ້ານກີບ* | *ເງິນແຮໜີ້ທວງຍາກ ລ້ານກີບ* | *ເງິນແຮທົ່ວໄປ ລ້ານກີບ* |
|---|---|---|---|
| ເງິນກູ້ທີ່ເກີດດອກອອກຜົນ | | | |
| - *ໜີ້ປົກກະຕິ* | 555,661 | - | 2,778 |
| - *ໜີ້ຄວນເອົາໃຈໃສ່ ຫຼື ຕິດຕາມພິເສດ* | 683 | - | 20 |
| ເງິນກູ້ທີ່ບໍ່ເກີດດອກອອກຜົນ (NPL) | | | |
| - *ໜີ້ຕ່ຳກວ່າມາດຕະຖານ* | 1,160 | 232 | - |
| - *ໜີ້ສົງໄສ* | - | - | - |
| - *ໜີ້ສູນ* | - | - | - |
| **ຍອດລວມ** | **557,504** | **232** | **2,798** |

ລາຍລະອຽດຂອງການຈັດຊັ້ນໜີ້ ແລະ ການຫັກເງິນແຮ ແມ່ນຕາມຂໍ້ກຳນົດຂອງ ທຫລ ນະວັນທີ 31 ທັນວາ 2014, ດັ່ງລຸ່ມນີ້:

| *ການຈັດຊັ້ນ* | *ຍອດເຫຼືອເງິນກູ້ ລ້ານກີບ* | *ເງິນແຮໜີ້ທວງຍາກ ລ້ານກີບ* | *ເງິນແຮທົ່ວໄປ ລ້ານກີບ* |
|---|---|---|---|
| ເງິນກູ້ທີ່ເກີດດອກອອກຜົນ | | | |
| - *ໜີ້ປົກກະຕິ* | 573,161 | - | 2,866 |
| - *ໜີ້ຄວນເອົາໃຈໃສ່ ຫຼື ຕິດຕາມພິເສດ* | 12,156 | - | 365 |
| **ຍອດລວມ** | **585,317** | **-** | **3,231** |

## 13. ຊັບສິນບັດຄົງທີ່ບໍ່ມີຕົວຕົນ

ການເຄື່ອນໄຫວຂອງຍອດເຫຼືອຂອງຊັບສິນບັດຄົງທີ່ບໍ່ມີຕົວຕົນ ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2014 ມີດັ່ງລຸ່ມນີ້:

| | *ສິດນຳໃຊ້ທີ່ດິນ* | *ຊ້ອບແວ* | *ລວມ* |
|---|---|---|---|
| | *ລ້ານກີບ* | *ລ້ານກີບ* | *ລ້ານກີບ* |
| **ຕົ້ນທຶນ:** | | | |
| ນະວັນທີ 1 ມັງກອນ 2014 | 14,499 | 2,413 | 16,912 |
| ນະວັນທີ 31 ທັນວາ 2014 | 14,499 | 2,413 | 16,912 |
| **ຫຼຸ້ຍຫ້ຽນສະສົມ:** | | | |
| ນະວັນທີ 1 ມັງກອນ 2014 | - | 1,902 | 1,902 |
| ນະຫຼຸ້ຍຫ້ຽນໃນປີ | - | 423 | 423 |
| ນະວັນທີ 31 ທັນວາ 2014 | - | 2,325 | 2,325 |
| **ມູນຄ່າທີ່ຍັງເຫຼືອສຸດທິ:** | | | |
| ນະວັນທີ 1 ມັງກອນ 2014 | 14,499 | 511 | 15,010 |
| ນະວັນທີ 31 ທັນວາ 2014 | 14,499 | 88 | 14,587 |

ການເຄື່ອນໄຫວຂອງຍອດເຫຼືອຂອງຊັບສິນບັດຄົງທີ່ບໍ່ມີຕົວຕົນ ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2013 ມີດັ່ງລຸ່ມນີ້:

| | *ສິດນຳໃຊ້ທີ່ດິນ* | *ຊ້ອບແວ* | *ລວມ* |
|---|---|---|---|
| | *ລ້ານກີບ* | *ລ້ານກີບ* | *ລ້ານກີບ* |
| **ຕົ້ນທຶນ:** | | | |
| ນະວັນທີ 1 ມັງກອນ 2013 | 14,499 | 2,205 | 16,704 |
| ຮັບເຂົ້າເພີ່ມ | - | 208 | 208 |
| ນະວັນທີ 31 ທັນວາ 2013 | 14,499 | 2,413 | 16,912 |
| **ຫຼຸ້ຍຫ້ຽນສະສົມ:** | | | |
| ນະວັນທີ 1 ມັງກອນ 2013 | - | 1,440 | 1,440 |
| ຫຼຸ້ຍຫ້ຽນໃນປີ | - | 462 | 462 |
| ນະວັນທີ 31 ທັນວາ 2013 | - | 1,902 | 1,902 |
| **ມູນຄ່າທີ່ຍັງເຫຼືອສຸດທິ:** | | | |
| ນະວັນທີ 1 ມັງກອນ 2013 | 14,499 | 765 | 15,264 |
| ນະວັນທີ 31 ທັນວາ 2013 | 14,499 | 511 | 15,010 |

14. ຊັບສົມບັດຄົງທີ່ມີຕົວຕົນ

ການເຄື່ອນໄຫວຂອງຍອດເຫຼືອຂອງຊັບສົມບັດຄົງທີ່ມີຕົວຕົນ ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2014 ມີດັ່ງລຸ່ມນີ້:

| | *ອາຄານ ແລະ ສິ່ງປຸກສ້າງ ລ້ານກີບ* | *ອຸປະກອນ ສຳນັກງານ ລ້ານກີບ* | *ພາຫະນະ ລ້ານກີບ* | *ເຟີນີເຈີ ແລະ ເຄື່ອງຕົບແຕ່ງ ລ້ານກີບ* | *ລວມ ລ້ານກີບ* |
|---|---|---|---|---|---|
| **ຕົ້ນທຶນ:** | | | | | |
| ນະວັນທີ 1 ມັງກອນ 2014 | 116,972 | 5,421 | 1,637 | 524 | 124,554 |
| ຮັບເຂົ້າເພີ່ມ | - | 24 | 687 | - | 711 |
| ນະວັນທີ 31 ທັນວາ 2014 | 116,972 | 5,445 | 2,324 | 524 | 125,265 |
| **ຫຼຸ້ຍຫ້ຽນສະສົມ:** | | | | | |
| ນະວັນທີ 1 ມັງກອນ 2014 | 8,399 | 4,215 | 951 | 56 | 13,621 |
| ຫຼຸ້ຍຫ້ຽນໃນປີ 20134 | 5,930 | 734 | 204 | 234 | 7,102 |
| ນະວັນທີ 31 ທັນວາ 2014 | 14,329 | 4,949 | 1,155 | 290 | 20,723 |
| **ມູນຄ່າທີ່ຍັງເຫຼືອສຸດທິ:** | | | | | |
| ນະວັນທີ 1 ມັງກອນ 2014 | 108,573 | 1,206 | 686 | 468 | 110,933 |
| ນະວັນທີ 31 ທັນວາ 2014 | 102,643 | 496 | 1,169 | 234 | 104,542 |

ການເຄື່ອນໄຫວຂອງຍອດເຫຼືອຂອງຊັບສົມບັດຄົງທີ່ມີຕົວຕົນ ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2013 ມີດັ່ງລຸ່ມນີ້:

| | *ອາຄານ ແລະ ສິ່ງປຸກສ້າງ ລ້ານກີບ* | *ອຸປະກອນ ສຳນັກງານ ລ້ານກີບ* | *ພາຫະນະ ລ້ານກີບ* | *ເຟີນີເຈີ ແລະ ເຄື່ອງຕົບແຕ່ງ ລ້ານກີບ* | *ລວມ ລ້ານກີບ* |
|---|---|---|---|---|---|
| **ຕົ້ນທຶນ:** | | | | | |
| ນະວັນທີ 1 ມັງກອນ 2013 | 116,972 | 5,364 | 1,637 | 524 | 124,497 |
| ຮັບເຂົ້າເພີ່ມ | - | 135 | - | - | 135 |
| ສະສາງອອກ | - | (78) | - | - | (78) |
| ນະວັນທີ 31 ທັນວາ 2013 | 116,972 | 5,421 | 1,637 | 524 | 124,554 |
| **ຫຼຸ້ຍຫ້ຽນສະສົມ:** | | | | | |
| ນະວັນທີ 1 ມັງກອນ 2013 | 2,437 | 3,021 | 624 | 78 | 6,160 |
| ຫຼຸ້ຍຫ້ຽນໃນປີ 2013 | 5,962 | 1,272 | 327 | (22) | 7,539 |
| ສະສາງອອກ | - | (78) | - | - | (78) |
| ນະວັນທີ 31 ທັນວາ 2013 | 8,399 | 4,215 | 951 | 56 | 13,621 |
| **ມູນຄ່າທີ່ຍັງເຫຼືອສຸດທິ:** | | | | | |
| ນະວັນທີ 1 ມັງກອນ 2013 | 114,535 | 2,343 | 1,013 | 446 | 118,337 |
| ນະວັນທີ 31 ທັນວາ 2013 | 108,573 | 1,206 | 686 | 468 | 110,933 |

## ທະນາຄານ ຫຸ້ນສ່ວນການຄ້າ ໄຊງ່ອນເທືອງຕິ່ນ - ສາຂາ ລາວ

ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ (ຕໍ່)
ນະວັນທີ ແລະ ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2014

### 15. ໜີ້ຕ້ອງຮັບດອກເບ້ຍຄ້າງຮັບ

| | 31/12/2014 ລ້ານກີບ | 31/12/2013 ລ້ານກີບ |
|---|---|---|
| ລາຍຮັບຈາກດອກເບ້ຍຄ້າງຮັບ - -ເງິນຝາກກັບທະນາຄານ | 34 | 55 |
| ລາຍຮັບຈາກດອກເບ້ຍຄ້າງຮັບ - ເງິນປ່ອຍກູ້ໃຫ້ລູກຄ້າ | 2,295 | 2,449 |
| | **2,329** | **2,504** |

### 16. ຊັບສິນອື່ນໆ

| | 31/12/2014 ລ້ານກີບ | 31/12/2013 ລ້ານກີບ |
|---|---|---|
| ໜີ້ຕ້ອງຮັບຈາກທະນາຄານຫຸ້ນສ່ວນການຄ້າ ໄຊງ່ອນເທືອງຕິ່ນ - ສຳນັກງານໃຫຍ່ *(ບົດອະທິບາຍເລກທີ 23)* | 106 | 87 |
| ລາຍຈ່າຍລໍຖ້າຈັດສັນ | 6,418 | 7,492 |
| ຈ່າຍດອກເບ້ຍລ່ວງໜ້າ | 1,955 | 1,669 |
| ເງິນລ່ວງໜ້າໃຫ້ຜູ່ສະໜອງ | 1,234 | 1,138 |
| ລາຍຈ່າຍອື່ນໆ | 411 | 401 |
| | **10,124** | **10,787** |

### 17. ໜີ້ຕ້ອງສົ່ງໃຫ້ກັບທະນາຄານອື່ນ

| | 31/12/2014 ລ້ານກີບ | 31/12/2013 ລ້ານກີບ |
|---|---|---|
| **ເງິນຝາກກະແສລາຍວັນຈາກທະນາຄານພາຍໃນປະເທດ** | **2** | **2** |
| ທະນາຄານຫຸ້ນສ່ວນທະຫານ - ສາຂາ ລາວ | 2 | 2 |
| **ເງິນຝາກກະແສລາຍວັນຈາກທະນາຄານຕ່າງໃນປະເທດ** | **87,182** | **85,836** |
| ທະນາຄານຫຸ້ນສ່ວນການຄ້າ ໄຊງ່ອນເທືອງຕິ່ນ *(ບົດອະທິບາຍ 23)* | 87,182 | 85,836 |
| **ເງິນຝາກໄລຍະຍາວຈາກທະນາຄານອື່ນ** | **32,930** | **51,305** |
| ກອງທຶນປົກປ້ອງຜູ່ຝາກເງິນ | 28,000 | - |
| ທະນາຄານ ອິນໂດຈີນ ສາຂາລາວ | 4,930 | - |
| ທະນາຄານຫຸ້ນສ່ວນທະຫານ - ສາຂາ ລາວ | - | 34,000 |
| ທະນາຄານຫຸ້ນສ່ວນການຄ້າ ໄຊງ່ອນເທືອງຕິ່ນ ສາຂາລາວ | - | 5,000 |
| ທະນາຄານ ລາວ - ຫວຽດ | - | 12,305 |
| **ເງິນຝາກໄລຍະຍາວຈາກທະນາຄານຕ່າງປະເທດ** | **23,051** | **28,046** |
| ທະນາຄານຫຸ້ນສ່ວນທະຫານ | 23,051 | 28,046 |
| | **143,165** | **165,189** |

## 17. ໜີ້ຕ້ອງສົ່ງໃຫ້ກັບທະນາຄານອື່ນ (ຕໍ່)

ເງິນຝາກມີກຳນົດຈາກກອງທຶນປົກປ້ອງຜູ້ຝາກເງິນທີ່ມີໄລຍະ 12 ເດືອນ ແລະ ມີອັດຕາດອກເບ້ຍ 8.50 % ຕໍ່ປີ

ເງິນຝາກມີກຳນົດຈາກທະນາຄານລາວອິນໂດຈີນສາຂາລາວ ທີ່ມີໄລຍະສາມເດືອນ ແລະ ມີອັດຕາດອກເບ້ຍ 3.00% ຕໍ່ປີ

ເງິນຝາກມີກຳນົດຈາກ ທະນາຄານ ຫຸ້ນສ່ວນທີ່ມີກຳນົດ 2 ເດືອນ ແລະ 3 ເດືອນ ແລະ ອັດຕາດອກເບ້ຍ 1.30%, 2.70% ຕໍ່ປີ, ຕາມລຳດັບ.

## 18. ໜີ້ຕ້ອງສົ່ງໃຫ້ລູກຄ້າ

ຍອດເຫຼືອເງິນຝາກຂອງລູກຄ້າ ແລະ ໜີ້ຕ້ອງຈ່າຍໃຫ້ແກ່ລູກຄ້າ ນະວັນທີ 31 ທັນວາ 2014 ມີດັ່ງນີ້:

| | *ສະແດງເປັນ ສະກຸນເງິນກີບ ລ້ານກີບ* | *ສະແດງເປັນ ສະກຸນເງິນອື່ນ ລ້ານກີບ* | *ລວມ ລ້ານກີບ* |
|---|---|---|---|
| ເງິນຝາກກະແສລາຍວັນ | 52,113 | 17,840 | 69,953 |
| ເງິນຝາກປະຢັດ | 8,625 | 26,996 | 35,621 |
| ເງິນຝາກຄ້ຳປະກັນ | 54 | 212 | 266 |
| ເງິນຝາກມີກຳນົດ | 165,658 | 81,833 | 247,491 |
| ໜີ້ຕ້ອງຈ່າຍອື່ນໆ | 2,904 | - | 2,904 |
| | **229,354** | **126,881** | **384,235** |

ຍອດເຫຼືອເງິນຝາກຂອງລູກຄ້າ ແລະ ໜີ້ຕ້ອງຈ່າຍໃຫ້ແກ່ລູກຄ້າ ນະວັນທີ 31 ທັນວາ 2013 ມີດັ່ງນີ້:

| | *ສະແດງເປັນ ສະກຸນເງິນກີບ ລ້ານກີບ* | *ສະແດງເປັນ ສະກຸນເງິນອື່ນ ລ້ານກີບ* | *ລວມ ລ້ານກີບ* |
|---|---|---|---|
| ເງິນຝາກກະແສລາຍວັນ | 49,667 | 26,144 | 75,811 |
| ເງິນຝາກປະຢັດ | 2,327 | 20,351 | 22,678 |
| ເງິນຝາກຄ້ຳປະກັນ | - | 454 | 454 |
| ເງິນຝາກມີກຳນົດ | 144,201 | 57,993 | 202,194 |
| ໜີ້ຕ້ອງຈ່າຍອື່ນໆ | 170 | - | 170 |
| | **196,365** | **104,942** | **301,307** |

## 18. ໜີ້ຕ້ອງສົ່ງໃຫ້ລູກຄ້າ ( ຕໍ່ )

ອັດຕາດອກເບ້ຍໃຫ້ແກ່ລູກຄ້າມີດັ່ງນີ້:

| | *2014*<br>*ອັດຕາດອກເບ້ຍ* | *2013*<br>*ອັດຕາດອກເບ້ຍ* |
|---|---|---|
| ເງິນຝາກກະແສລາຍວັນສະກຸນເງິນກີບ | ບໍ່ມີດອກເບ້ຍ | ບໍ່ມີດອກເບ້ຍ |
| ເງິນຝາກກະແສລາຍວັນສະກຸນເງິນຕ່າງປະເທດ | ບໍ່ມີດອກເບ້ຍ | ບໍ່ມີດອກເບ້ຍ |
| ເງິນຝາກປະຢັດ ສະກຸນເງິນກີບ | 3.00% | 3.00% |
| ເງິນຝາກປະຢັດ ສະກຸນເງິນໂດລາ | 1.00% | 1.50% |
| ເງິນຝາກປະຢັດ ສະກຸນເງິນບາດ | 1.00% | 1.50% |
| ເງິນຝາກປະຈຳ ສະກຸນເງິນກີບ | 6.00 - 13.00% | 6.00 - 13.00% |
| ເງິນຝາກປະຈຳ ສະກຸນເງິນໂດລາ | 1.00 - 6.55% | 2.50 - 7.00% |
| ເງິນຝາກປະຈຳ ສະກຸນເງິນບາດ | 1.00 - 6.55% | 3.47 – 6.70% |

## 19. ດອກເບ້ຍຄ້າງຈ່າຍ

| | *31/12/2014*<br>*ລ້ານກີບ* | *31/12/2013*<br>*ລ້ານກີບ* |
|---|---|---|
| ດອກເບ້ຍຄ້າງຈ່າຍ – ສົ່ງໃຫ້ທະນາຄານອື່ນ | 28 | 876 |
| ດອກເບ້ຍຄ້າງຈ່າຍ – ເງິນຝາກຂອງລູກຄ້າ | 13,108 | 6,965 |
| | **13,136** | **7,841** |

## 20. ອາກອນຄ້າງຈ່າຍໃຫ້ລັດຖະບານ

| | *31/12/2014*<br>*ລ້ານກີບ* | *31/12/2013*<br>*ລ້ານກີບ* |
|---|---|---|
| ອາກອນກຳໄລຕ້ອງຈ່າຍ | 744 | 1,000 |
| ອາກອນເງິນເດືອນຂອງພະນັກງານຕ້ອງຈ່າຍ | 226 | 223 |
| | **970** | **1,223** |

## 20. ອາກອນຄ້າງຈ່າຍໃຫ້ລັດຖະບານ (ຕໍ່)

***ອາກອນກໍາໄລ***

ທາງສາຂາມີພັນທະຕ້ອງຈ່າຍອາກອນໃນອັດຕາ 24% ຂອງກໍາໄລກ່ອນອາກອນ ໂດຍອີງຕາມກົດໝາຍວ່າດ້ວຍສ່ວຍສາອາກອນ ສະບັບເລກທີ 05/ສພຊ ລົງວັນທີ 20 ທັນວາ 2011, ເຊິ່ງມີຜົນບັກສັກສິດນັບຕັ້ງແຕ່ 1 ມັງກອນ 2013

| | *2014* | *2013* |
|---|---|---|
| | *ລ້ານກີບ* | *ລ້ານກີບ* |
| **ກໍາໄລທີ່ຕ້ອງເສຍອາກອນ** | **16,290** | **20,968** |
| **ອາກອນກໍາໄລ 24% ຂອງກໍາໄລຕ້ອງເສຍອາກອນ** | **3,910** | **5,032** |
| ອາກອນທີ່ຕ້ອງຈ່າຍໃນຕົ້ນປີ | 1,001 | 4,306 |
| ອາກອນທີ່ໄດ້ຈ່າຍໃນປີ | (4,167) | (8,338) |
| **ອາກອນທີ່ຕ້ອງຈ່າຍໃນທ້າຍປີ** | **744** | **1,000** |

ການມອບອາກອນຂອງສາຂາຕ້ອງໄດ້ຮັບການກວດກາໂດຍເຈົ້າໜ້າທີ່ສ່ວຍສາອາກອນ, ຍ້ອນວ່າການນໍາໃຊ້ກົດໝາຍສ່ວຍສາອາກອນ ແລະ ລະບຽບການຕ່າງໆແມ່ນມີຫລາຍປະເພດເຊິ່ງອາດຈະແປຄວາມໄດ້ເປັນຫລາຍຢ່າງ, ຈໍານວນທີ່ໄດ້ຖືກລາຍງານຢູ່ໃນເອກະສານລາຍງານການເງິນອາດຈະມີການປ່ຽນແປງຂຶ້ນກັບການໄລ່ລຽງຂອງເຈົ້າໜ້າທີ່ສ່ວຍສາອາກອນ.

## 21. ໜີ້ສິນອື່ນໆ

| | *31/12/2014* | *31/12/2013* |
|---|---|---|
| | *ລ້ານກີບ* | *ລ້ານກີບ* |
| ໜີ້ຕ້ອງສົ່ງໃຫ້ພະນັກງານ | - | 467 |
| ໜີ້ຕ້ອງສົ່ງໃຫ້ຜູ້ສະໜອງ | 932 | 398 |
| ໜີ້ຕ້ອງສົ່ງໃຫ້ສໍານັກງານໃຫຍ່ *(ບົດອະທິບາຍເລກທີ 23)* | 14,342 | 17,424 |
| | **15,274** | **18,289** |

## 22. ເງິນສົດ ແລະ ທຽບເທົ່າເງິນສົດ

| | *31/12/2014* | *31/12/2013* |
|---|---|---|
| | *ລ້ານກີບ* | *ລ້ານກີບ* |
| ເງິນສົດໃນກໍາມື | 14,776 | 28,060 |
| ບັນຊີເງິນຝາກທີ່ມີຢູ່ກັບ ທຫລ | 102,363 | 43,173 |
| ການຝາກກະແສລາຍວັນທີ່ມີຢູ່ທະນາຄານອື່ນໆ | 21,094 | 8,294 |
| | **138,233** | **79,527** |

## 23. ບັນດາລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງ

ລາຍການເຄື່ອນໄຫວ ກັບພາກສ່ວນທີ່ກ່ຽວຂ້ອງປະກອບດ້ວຍລາຍການທຸລະກຳທັງໝົດທີ່ດຳເນີນການໂດຍພາກສ່ວນອື່ນໆ ທີ່ກ່ຽວຂ້ອງກັບສາຂາ, ພາກສ່ວນຈະກ່ຽວຂ້ອງກັບສາຂາຖ້າວ່າ:

(ກ) ພາກສ່ວນທີ່ທຳໜ້າທີ່ທາງກົງ ຫຼື ທາງອ້ອມໂດຍຜ່ານຄົນກາງຄົນໜຶ່ງ ຫຼື ຫຼາຍຄົນ ດັ່ງລຸ່ມນີ້:

- ຄວບຄຸມ, ຖືກຄວບຄຸມ ຫຼື ຢູ່ໃຕ້ການຄວບຄຸມລວມກັບສາຂາ (ໃນນີ້ລວມມີ ສຳນັກງານ, ສາຂາ ແລະ ຄູ່ສາຂາ);
- ມີຜົນປະໂຫຍດໃນທະນາຄານ ທີ່ມີອິດທິພົນທີ່ສຳຄັນຕໍ່ສາຂາ; ຫຼື
- ມີສ່ວນຮ່ວມໃນການຄວບຄຸມສາຂາ.

(ຂ) ພາກສ່ວນທີ່ຮ່ວມລົງທຶນກັບສາຂາ

(ຄ)ພາກສ່ວນທີ່ເປັນສະມາຊິກຄົນສຳຄັນໃນຄະນະບໍລິຫານຂອງສາຂາ ຫຼື ຂອງບໍລິສັດແມ່

(ງ) ພາກສ່ວນທີ່ເປັນສະມາຊິກປ່າງໃກ້ຊິດຂອງຄອບຄົວຂອງບຸກຄົນທີ່ໄດ້ອ້າງອີງໃນຂໍ້ (ກ) ຫຼື (ງ);

(ຈ) ພາກສ່ວນທີ່ເປັນທະນາຄານທີ່ຖືກຄວບຄຸມ, ຄວບຄຸມຮ່ວມ ຫຼື ມີອິດທິພົນສຳຄັນ ຫຼື ຜູ່ທີ່ມີສິດໃນການລົງຄະແນນສຽງທີ່ສຳຄັນເຊັ່ນ: ທະນາຄານແຕ່ງຕັ້ງໂດຍກົງ ຫຼື ທາງອ້ອມ, ກັບບຸກຄົນທີ່ລະບຸໃນຂໍ້ (ຄ) ຫຼື (ງ); ຫຼື;

(ສ) ພາກສ່ວນທີ່ເປັນຜົນປະໂຫຍດຂອງພະນັກງານໃນສາຂາ, ຫຼື ສາຂາອື່ນໆທີ່ກ່ຽວຂ້ອງກັບພາກສ່ວນຂອງສາຂາ.

ລາຍການເຄື່ອນໄຫວທີ່ສຳຄັນກັບພາກສ່ວນທີ່ກ່ຽວຂ້ອງໃນວັນທີ 31 ທັນວາ 2014 ແມ່ນມີດັ່ງນີ້:

| *ພາກສ່ວນກ່ຽວຂ້ອງ* | *ລາຍການເຄື່ອນໄຫວ* | *ໜີ້ຕ້ອງຮັບ ລ້ານກີບ* | *ໜີ້ຕ້ອງຈ່າຍ ລ້ານກີບ* |
|---|---|---|---|
| ທະນາຄານ ຫຸ້ນສ່ວນການຄ້າ ໄຊງ່ອນເທືອງຕື່ນ - ສານັກງານໃຫຍ່ | ເງິນຝາກຢູ່ສຳນັກງານໃຫຍ່ | 14,973 | - |
| | ໜີ້ຕ້ອງຮັບອື່ນໆ | 106 | - |
| | ເງິນຝາກຈາກສຳນັກງານໃຫຍ່ | - | (87,182) |
| | ໜີ້ຕ້ອງຈ່າຍໃຫ້ແກ່ສຳນັກງານໃຫຍ່ | - | (14,342) |

ຜົນຕອບແທນຂອງສະມາຊິກສະພາບໍລິຫານ ແລະ ຄະນະອຳນວຍການມີດັ່ງນີ້:

| | *2014 ລ້ານກີບ* | *2013 ລ້ານກີບ* |
|---|---|---|
| ເງິນເດືອນ | 1,621 | 1,159 |
| ໂບນັດ ແລະ ເງິນເບັຍລ້ຽງ | 578 | 386 |
| | **2,199** | **1,545** |

## ທະນາຄານ ຫຸ້ນສ່ວນການຄ້າ ໄຊ່ງ່ອນເທືອງຕິ່ນ - ສາຂາ ລາວ

ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ (ຕໍ່)
ນະວັນທີ ແລະ ສໍາລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2014

**24. ເຫດການທີ່ເກີດຂຶ້ນພາຍຫລັງວັນທີຂອງໃບລະຫູບຊັບສິນບັດ**

ນອກຈາກຂໍ້ມູນທີ່ໄດ້ເປີດເຜີຍໃນເອກະສານລາຍງານການເງິນ, ໃນມື້ທີ່ເອກະສານລາຍງານການເງິນໄດ້ຖືກສ້າງຂຶ້ນ ບໍ່ໄດ້ມີເຫດການໃດທີ່ສໍາຄັນເກີດຂຶ້ນຫລັງຈາກວັນທີ 31 ທັນວາ 2014 ທີ່ສົ່ງຜົນກະທົບຕໍ່ຖານະທາງການເງິນຂອງທະນາຄານ ໃນວັນທີ 31 ທັນວາ 2014.

ກະກຽມໂດຍ:

ທ່ານ ທຸມພັນ ທໍາມະວົງ
ຜູ້ຈັດການ ການເງິນ ແລະ ບັນຊີ

ອະນຸມັດໂດຍ:

ທ່ານ Pham Quang Phu
ຜູ້ອໍານວຍການສາຂາ

ນະຄອນຫຼວງວຽງຈັນ, ສປປ ລາວ

19 ມີນາ 2015